ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານອະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

22-28 ກຸມພາ 2026
ປີທີ 15
ສະບັບທີ 1055
ລາຍສັປະດາ

## ປອ. ໄຊສົມພອນ ພົມວິຫານ ໃຊ້ສິດປ່ອນບັດຢູ່ໜ່ວຍເລືອກຕັ້ງທີ 23 ວັດສີບຸນເຮືອງ



(ສພຊ) - ວັນທີ 22 ກຸມພານີ້, ບັນຍາກາດການປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ໄດ້ດຳເນີນໄປຢ່າງຟົດຟື້ນໃນທົ່ວປະເທດ ໃນນີ້, ທີ່ໜ່ວຍເລືອກຕັ້ງທີ 23 ເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ (ວັດສີບຸນເຮືອງ, ເມືອງຈັນທະບູລີ), ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະ

ອ່ານຕໍ່ໜ້າ 8



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການປະຕິວັດຂອງປະເທດເຮົາໃນໄລຍະໃໝ່ນີ້ ແມ່ນໄລຍະແຫ່ງການປັບປຸງ, ຂະຫຍາຍ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ຂ້າມຜ່ານຂັ້ນສູ່ສັງຄົມນິຍົມເທື່ອລະກ້າວ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 321)

ລັກສະນະພື້ນຖານຂອງການປະຕິວັດປະເທດເຮົາໃນໄລຍະໃໝ່ ແມ່ນລັກສະນະປະຊາທິປະໄຕປະຊາຊົນ ກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ, ຫາກບໍ່ແມ່ນຂະຫຍາຍຕົວໄປຢູ່ນອກວົງໂຄຈອນຂອງສັງຄົມນິຍົມແຕ່ຢ່າງໃດ. ອັນນີ້ເປັນບັນຫາທີ່ພວກເຮົາຈະຕ້ອງຮັບຮູ້ໃຫ້ຈະແຈ້ງ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 322)

ພັກເຮົາຖືວ່າທີ່ດິນແມ່ນຂຶ້ນກັບກຳມະສິດຂອງວົງຄະນາຍາດແຫ່ງຊາດ ໂດຍແມ່ນລັດເປັນຕົວແທນ, ປະຊາຊົນໄດ້ຮັບສິດນຳໃຊ້ທີ່ດິນ ນັບທັງສິດສືບມູນແລະໂອນໂດຍຖືກຕ້ອງຕາມກົດໝາຍ ໃນຖານະທີ່ເຂົາເຈົ້າເປັນສະມາຊິກທີ່ເປັນເຈົ້າຂອງວົງຄະນະຍາດ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 327)

ອ່ານຕໍ່ສະບັບໜ້າ

## ນາຍົກລັດຖະມົນຕີ ໃຊ້ສິດປ່ອນບັດຢູ່ຈຳປາສັກ

(ສພຊ) - ວັນອາທິດທີ 22 ກຸມພານີ້ ທີ່ສະໂມສອນຫຼັກ 4 ແຂວງຈຳປາສັກ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ໄດ້ເຂົ້າຮ່ວມພິທີ ແລະ ໃຊ້ສິດປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ຊຸດທີ X ແລະ ສະມາຊິກສະພາປະ

ອ່ານຕໍ່ໜ້າ 8




## ປະທານສູນກາງແນວລາວສ້າງຊາດ ໃຊ້ສິດປ່ອນບັດເລືອກຕັ້ງຢູ່ຊຽງຂວາງ



(ສພຊ) - ວັນອາທິດທີ 22 ກຸມພານີ້, ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ, ທ່ານ ຣສ. ພູວົງ ອຸ່ນຄຳແສນ ກຳມະການສູນກາງພັກ, ເລຂາພັກແຂວງຊຽງຂວາງ ພ້ອມດ້ວຍ

ອ່ານຕໍ່ໜ້າ 8

## ບັນຍາກາດປ່ອນບັດຢູ່ເຂດເລືອກຕັ້ງທີ 13



ອ່ານຕໍ່ໜ້າ 5

## ຕິດຕາມວຽກງານຮອບດ້ານ ແລະ ບັນຍາກາດກ່ອນການເລືອກຕັ້ງຢູ່ເຊກອງ ແລະ ສາລະວັນ



(ສພຊ) - ວັນທີ 20-21 ກຸມພານີ້, ທ່ານ ພົຈວ. ປອ. ມາລາ ວິລະຈິດ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ກຳມະການອະນຸກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງຄະນະກຳມະການເລືອກຕັ້ງ

ອ່ານຕໍ່ໜ້າ 12

## ອະນຸກຳມະການເລຂານຸການ ຕິດຕາມກວດກາວຽກງານເລືອກຕັ້ງຢູ່ໄຊຍະບູລີ

(ສພຊ) - ເພື່ອເກັບກຳບັນດາຄຳຄິດເຫັນ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ຂອງອະນຸກຳມະການເລຂານຸການຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ໃນການຈັດຕັ້ງປະຕິບັດ

ອ່ານຕໍ່ໜ້າ 3



ຜູ້ແທນດີ ມີສີແກ່ຊາດ (ໜ້າ 9)



Sri Lanka ຖອນສິດ... (ໜ້າ 11)

ເຝົ້າໄວ້ ໄດ້ຍິດຮຽນ
❖ ວິເສດ ສະແຫວງສຶກສາ
ເພື່ອຄຸນນະພາບ... (ໜ້າ 12)

**ຊົມເຊີຍຜົນສຳເລັດການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V**

# ຊຸກຍູ້ການເລືອກຕັ້ງຢູ່ແຂວງສະຫວັນນະເຂດ



(ສພຊ) - ກອງປະຊຸມຕິດຕາມ, ຊຸກຍູ້ ການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ V ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 20 ກຸມພາຜ່ານມາ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະປະຈຳການຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ທັງເປັນຮອງຫົວໜ້າອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ແລະ ທ່ານ ບຸນໂຈມ ອຸບົນປະເສີດ ເລຂາພັກແຂວງ, ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ເຂົ້າຮ່ວມມີບັນດາທ່ານໃນຄະນະກຳມະການເລືອກຕັ້ງຂັ້ນແຂວງ, ອະນຸກຳມະການເລຂານຸການຂອງ ຄລຊ, ອະນຸກຳມະການໂຄງປະກອບ ແລະບຸກຄະລາກອນຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະຂັ້ນເມືອງຈຳນວນໜຶ່ງເຊິ່ງກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເລືອກຕັ້ງຄັ້ງນີ້ ໂດຍສະເພາະແມ່ນການເຜີຍແຜ່ເອື່ອມຊຶມເອກະສານທີ່ກ່ຽວຂ້ອງ, ບັນຍາກາດໃນການເລືອກຕັ້ງ, ການເກັບກຳຂໍ້ມູນກ່ຽວກັບບັນຊີຜູ້ມີສິດເລືອກຕັ້ງໃນທົ່ວແຂວງ ແລະ ເມືອງຕ່າງໆ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການກະກຽມຄວາມພ້ອມໃນການນຳໃຊ້ລະບົບນັບຄະແນນທັນສະໄໝ (E-vote).

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ເນັ້ນໜັກໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ-ເມືອງ ສືບຕໍ່ກຽມຄວາມພ້ອມຢູ່ໜ່ວຍປ່ອນບັດຕ່າງໆ, ເພີ່ມທະວີວຽກງານນຳພາແນວຄິດໃຫ້ແກ່ຜູ້ມີສິດເລືອກຕັ້ງ ເພື່ອໃຫ້ເປັນລຸຄາດໝາຍ, ສູ້ຊົນໃຫ້ຜູ້ມີສິດເລືອກຕັ້ງ ຮັບຮູ້ ແລະ ເຂົ້າໃຈທີ່ຖືກຕ້ອງ ແລະ ເປັນເອກະພາບຕໍ່ການເລືອກຕັ້ງຄັ້ງນີ້ ເພື່ອເຮັດໃຫ້ຜູ້ມີສິດເລືອກຕັ້ງໄປໃຊ້ສິດເລືອກຕັ້ງໃຫ້ຄົບຖ້ວນ; ການເກັບກຳບັນຊີຜູ້ມີສິດເລືອກຕັ້ງແມ່ນໃຫ້ເອົາໃຈໃສ່ຕື່ມເປັນຕົ້ນ: ຜູ້ໄປອອກແຮງງານຢູ່ຕ່າງປະເທດ, ຜູ້ໄປອອກແຮງງານຢູ່ແຂວງອື່ນ; ຄະນະກຳມະການເລືອກຕັ້ງຂັ້ນແຂວງ ສືບຕໍ່ ນຳພາ-ຊີ້ນຳຄະນະກຳມະການເລືອກຕັ້ງຂັ້ນເມືອງ ກະກຽມກຳນົດສະຖານທີ່ຈຸດສັງລວມ ແລະ ປ້ອນຄະແນນການເລືອກຕັ້ງຢູ່ 14 ເມືອງ ແລະ ນະຄອນ ເພື່ອປ້ອນເຂົ້າລະບົບນັບຄະແນນທັນສະໄໝ ໂດຍຮັບປະກັນຄວາມຮັບຜິດຊອບ, ຈັນຍາບັນ ແລະການຮັກສາຄວາມລັບຂອງຜູ້ຮັບຜິດຊອບນັບຄະແນນ; ສືບຕໍ່ກະກຽມຮ່າງບົດລາຍງານກ່ຽວກັບຜົນສຳເລັດຂອງການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາ ເພື່ອລາຍງານໃຫ້ຄະນະປະຈຳການ ຄລຊ ທັນລາຍງານຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X.

**(ກົງທະນູຄຳ ພິພັດເສລີ)**

# ຈຳປາສັກ ສຳເລັດວຽກງານກະກຽມການເລືອກຕັ້ງ



(ສພຊ) - ວັນເສົາທີ 21 ກຸມພານີ້ທີ່ສະພາປະຊາຊົນແຂວງຈຳປາສັກ ໄດ້ມີກອງປະຊຸມລາຍງານກ່ຽວກັບຜົນສຳເລັດຂອງການເຄື່ອນໄຫວວຽກງານກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ຢູ່ແຂວງຈຳປາສັກໂດຍການເປັນປະທານຂອງທ່ານ ຈັນທະວົງ ແສນອາມາດ ມົນຕີ ຮອງປະທານກຳມາທິການການຕ່າງປະເທດ, ກຳມະການອະນຸກຳມະການເລຂານຸການຂອງຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ).

ທ່ານ ທິບພະສອນ ສະມາເລີກຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຕາງໜ້າອະນຸກຳມະການເລຂານຸການ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ (ຄລຂ) ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານຂອງອະນຸກຳມະການໃນໄລຍະຜ່ານມາວ່າ: ໂດຍກຳແໜ້ນຈິດໃຈຊີ້ນຳຂອງກົມການເມືອງສູນກາງພັກ ແລະຄະນະກຳມະການເລືອກຕັ້ງລະດັບຊາດ, ອົງຄະນະພັກ, ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ໄດ້ກຳນົດເອົາວຽກງານເລືອກຕັ້ງເປັນວຽກຈຸດສຸມບຸລິມະສິດ ສິ່ງທີ່ພົ້ນເດັ່ນແມ່ນການນຳໃຊ້ສິລະປະວັດທະນະທຳທ້ອງຖິ່ນເຊັ່ນ "ໜັງປະຫຼັດຕົ້" ມາສອດແຊກເນື້ອໃນການເລືອກຕັ້ງ ເພື່ອຊ່ວຍໃຫ້ພໍ່ແມ່ປະຊາຊົນເຂົ້າໃຈງ່າຍ ເພື່ອປຸກລະດົມຈິດໃຈຮັກຊາດ ແລະ ສ້າງ

# ຕິດຕາມ, ຊຸກຍູ້ວຽກງານຮອບດ້ານ ເພື່ອກຽມບັ້ນເລືອກຕັ້ງຢູ່ອຸດົມໄຊ



(ສພຊ) - ກອງປະຊຸມຕິດຕາມ, ຊຸກຍູ້ວຽກງານຮອບດ້ານ ແລະ ບັນຍາກາດກ່ອນການດຳເນີນການເລືອກຕັ້ງ ເພື່ອກະກຽມໃຫ້ແກ່ບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊົນຂັ້ນແຂວງ ຊຸດທີ V ຢູ່ແຂວງອຸດົມໄຊ ໄດ້ຈັດຂຶ້ນໃນວັນທີ 20 ກຸມພາ 2026 ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ, ກຳມະການອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ, ມີທ່ານຄຳເຜີຍ ງອນວັນຄຳຮອງປະທານສະພາປະຊາຊົນແຂວງ, ຜູ້ປະຈຳການຄະນະກຳມະການເລືອກຕັ້ງຂັ້ນແຂວງ (ຄລຂ) ທັງເປັນຫົວໜ້າອະນຸກຳມະການເລຂານຸການ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ທອງໄຊ ທໍ່ຈິງເລຍຈີ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ທັງເປັນກຳມະການອະນຸກຳມະການເລຂານຸການ ຂອງ ຄລຂ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດບັນດາໜ້າວຽກທີ່ສຳຄັນໃນໄລຍະຜ່ານມາ ພ້ອມທັງແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາທາງດ້ານຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ໃນການການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ແລະ ຊອກຫາວິທີແກ້ໄຂບັນຫາທີ່ເກີດຂຶ້ນ ເພື່ອຮັບປະກັນເຮັດໃຫ້ການເລືອກຕັ້ງຢູ່ແຂວງອຸດົມໄຊທີ່ຈະຈັດຂຶ້ນໃນວັນອາທິດທີ 22 ກຸມພານີ້ ສຳເລັດຕາມຄາດໝາຍທີ່ກຳນົດໄວ້ ຄື: 1) ນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, 2) ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, 3) ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບແລະມີຄວາມປອດໄພ 100% ແລະ 4) ນຳພາວຽກງານປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ 100%.

ຄວາມຕື່ນຕົວໃຫ້ແກ່ພົນລະເມືອງໄປໃຊ້ສິດເລືອກຕັ້ງຢ່າງເປັນຂະບວນຟົດຟື້ນ ແລະ ເປັນໄປຕາມແຜນເປັນຢ່າງດີ; ຖືເອົາການຜັນຂະຫຍາຍນິຕິກຳຈາກສູນກາງເປັນໜ້າທີ່ຕົ້ນຕໍ ໂດຍໄດ້ກຳນົດແຜນດຳເນີນງານອອກເປັນ 3 ໄລຍະ ແລະ 4 ບາດກ້າວໃນການຈັດຕັ້ງປະຕິບັດ, ໄດ້ອອກນິຕິກຳຊີ້ນຳໃຫ້ 9 ເມືອງ ແລະ 1 ນະຄອນ ສ້າງຕັ້ງອະນຸກຳມະການຊ່ວຍວຽກ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດ ຕາມຄຳແນະນຳຂອງ ຄລຊ, ອອກນິຕິກຳຂອງ ຄລຂ ຈຳນວນ 30 ສະບັບ ເພື່ອເປັນບ່ອນອີງໃນການເກັບກຳແລະລາຍງານຂອງຄະນະກຳມະການເລືອກຕັ້ງຂັ້ນເມືອງ-ນະຄອນ ກ່ຽວກັບສະຖິຕິພົນລະເມືອງ, ຜູ້ມີສິດປ່ອນບັດເລືອກຕັ້ງ, ຄະນະຮັບຜິດຊອບໜ່ວຍປ່ອນບັດ, ກາຈ້ຳ, ຫີບບັດ ແລະອຸປະກອນຮັບໃຊ້ການເລືອກຕັ້ງຢ່າງລະອຽດ ເຊິ່ງທົ່ວແຂວງມີພົນລະເມືອງ 783,607 ຄົນ ຍິງ 394,423 ຄົນ, ຜູ້ມີສິດປ່ອນບັດ 457,302 ຄົນ ຍິງ 231,696 ຄົນ, ມີ 615 ໜ່ວຍປ່ອນບັດ; ສຳເລັດການກຳນົດເປົ້າໝາຍອອກສະໝັກຮັບເລືອກຕັ້ງເປັນ ສສຊ ຊຸດທີ X 13 ທ່ານ ແລະ ສສຂ ຊຸດທີ V 70 ທ່ານ ສົ່ງໃຫ້ອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນຂອງ ຄລຊ ທັນຕາມກຳນົດເວລາ; ສຳເລັດການເຝິກອົບຮົມໃຫ້ເປົ້າໝາຍອອກສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ, ສ້າງແຜນຈັດຕັ້ງການໂຄສະນາຫາສຽງໃຫ້ຜູ້ອອກສະໝັກຮັບເລືອກຕັ້ງ ລົງພົບປະຜູ້ມີສິດປ່ອນບັດຢູ່ຂັ້ນທ້ອງຖິ່ນຮາກຖານ ເຊິ່ງປັດຈຸບັນແມ່ນສຳເລັດເຄື່ອນໄຫວ. ຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ສົມທົບແໜ້ນກັບກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ ) ຕາມຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດ, ແຈ້ງການຂອງ 2 ກະຊວງ ປກຊ-ປກສ ແລະຄຳແນະນຳຂອງ ຄລຂ ເຮັດໃຫ້ຂະບວນການໂຄສະນາເຜີຍແຜ່ຢ່າງກວ້າງຂວາງຮອດຮາກຖານ; ມີການປະດັບປະດາ, ຕິດປ້າຍຄຳຂວັນຕາມສຳນັກງານ-ອົງການ ແລະ ຮາກຖານບ້ານ. ສຳການປ່ອນບັດເລືອກຕັ້ງຂອງ 2 ກຳລັງປະກອບອາວຸດ ແມ່ນມີບັນຍາກາດຟົດຟື້ນ, ຜູ້ມີສິດເລືອກຕັ້ງໄດ້ເຂົ້າຮ່ວມຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບການເລືອກຕັ້ງ, ສາມາດຮັບປະກັນຄວາມສະຫງົບ, ປອດໄພ ແລະ ເປັນລະບຽບ ຮຽບຮ້ອຍ; ການດຳເນີນການປ່ອນບັດເລືອກຕັ້ງຮັບປະກັບຄວາມໂປ່ງໃສແລະທັນເວລາ ສາມາດບັນລຸຕາມ 4 ຄາດໝາຍ; ຜູ້ມີສິດເລືອກຕັ້ງ 16,249 ຄົນ, ມີ 68 ໜ່ວຍປ່ອນບັດ ແລະ ມີຜູ້ໄປໃຊ້ສິດປ່ອນບັດເລືອກຕັ້ງ 16,249 ຄົນ.

ທ່ານ ຈັນທະວົງ ແສນອາມາດມົນຕີ ໄດ້ມີຄຳເຫັນພ້ອມທັງກ່າວຊົມເຊີຍໃນການຈັດຕັ້ງປະຕິບັດວຽກງານຂອງຄະນະຮັບຜິດຊອບວຽກງານກະກຽມຄວາມພ້ອມໃນບັ້ນເລືອກຕັ້ງ ແມ່ນເຮັດໄດ້ດີຫຼາຍ ແລະ ຈົ່ງສືບຕໍ່ເອົາໃຈໃສ່ໂຄສະນາໃຫ້ຜູ້ມີສິດປ່ອນບັດ ແລະ ການນັບຄະແນນຕື່ມອີກເພື່ອໃຫ້ມີຄວາມເຂົ້າໃຈຖືກຕ້ອງ, ຈະແຈ້ງໂປ່ງໃສ ແລະຮັບປະກັນໃຫ້ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

# ຊຸກຍູ້ການກະກຽມຄວາມພ້ອມເລືອກຕັ້ງ ຢູ່ແຂວງຫົວພັນ ແລະ ແຂວງຊຽງຂວາງ



(ສພຂ) - ເພື່ອຮັບປະກັນໃຫ້ແກ່ການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ມີຜົນສຳເລັດຕາມລະດັບຄາດໝາຍ; ວັນທີ 19 ກຸມພານີ້, ທ່ານ ສຈ. ປອ. ວຽງວິໄລ ທ່ຽງຈັນໄຊ ຮອງປະທານກຳມາທິການຍຸຕິທຳ, ກຳມະການອະນຸກຳມະການເລຂານຸການ (ອລຂ) ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມບັນຍາກາດກ່ອນການເລືອກຕັ້ງຢູ່ເມືອງຊຳເໜືອ ແລະ ເມືອງແອດ ແຂວງຫົວພັນ ໂດຍມີບັນດາທ່ານຫົວໜ້າ-ຮອງຫົວໜ້າອະນຸກຳມະການເລຂານຸການຂັ້ນແຂວງ-ຂັ້ນເມືອງ ຕະຫຼອດຮອດຜູ້ຊ່ວຍວຽກບັ້ນເລືອກຕັ້ງຄັ້ງນີ້ເຂົ້າຮ່ວມ ເຊິ່ງຜູ້ຕາງໜ້າ ອລຂ ຂັ້ນແຂວງ-ຂັ້ນເມືອງ ໄດ້ລາຍງານສະພາບບັນຍາກາດການກະກຽມຄວາມພ້ອມຮອບດ້ານໃນບັ້ນເລືອກຕັ້ງ ໂດຍໄດ້ຈັດຕັ້ງປະຕິບັດຕາມແຜນດຳເນີນງານໃນ 4 ບາດກ້າວ ເປັນຕົ້ນ: ວຽກງານຊຸກຍູ້ປຸກລະດົມຂະບວນການຕ່າງໆ, ຈັດຕັ້ງການໂຄສະນາຫາສຽງ, ການເກັບກຳສະຖິຕິຈຳນວນຜູ້ມີສິດເລືອກຕັ້ງ, ການກະກຽມອຸປະກອນຮັບໃຊ້ການເລືອກຕັ້ງ, ການແຈກຢາຍຮູບ-ຊີວະປະຫວັດຂອງຜູ້ສະໝັກຮັບເລືອກຕັ້ງ, ບັດລົງຄະແນນສຽງ, ຈັດຕັ້ງການເຊື່ອມຊຶມ ແລະ ເຜີຍແຜ່ບັນດາເອກະສານສຳຄັນທີ່ກ່ຽວກັບການເລືອກຕັ້ງ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ); ຈາກນັ້ນ, ໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ໂດຍສະເພາະແມ່ນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນດາຄຳສະເໜີຕ່າງໆ ທັງໄດ້ລົງຕິດຕາມສະຖານທີ່ປ່ອນບັດຕົວຈິງຈຳນວນໜຶ່ງ.

ທ່ານ ສຈ. ປອ. ວຽງວິໄລທ່ຽງຈັນໄຊໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການກະກຽມຄວາມພ້ອມທີ່ມີຜົນສຳເລັດຫຼາຍດ້ານ ພ້ອມທັງເນັ້ນໜັກໃຫ້ສືບຕໍ່ເອົາໃຈໃສ່ປຸກລະດົມຂະບວນການຕ່າງໆ ຕາມທີ່ໄດ້ປະກອບໃນໜ້າວຽກຂອງແຕ່ລະອະນຸກຳມະການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອດຳເນີນການປ່ອນບັດເລືອກຕັ້ງຄັ້ງນີ້ໃຫ້ຖືກຕ້ອງຕາມຂັ້ນຕອນ, ມີຂະບວນການຟົດຟື້ນ ແລະ ຮັບປະກັນເຮັດໃຫ້ການປ່ອນບັດເລືອກຕັ້ງ ມີປະສິດທິພາບ ແລະ ປະສິດທິຜົນ, ປະສົບຜົນສຳເລັດຕາມແຜນການທີ່ວາງໄວ້.

ວັນທີ 21 ກຸມພາ, ຄະນະຂອງທ່ານ ສຈ. ປອ. ວຽງວິໄລ ທ່ຽງຈັນໄຊ ໄດ້ສືບຕໍ່ຕິດຕາມການກະກຽມ ແລະ ບັນຍາກາດກ່ອນດຳເນີນການເລືອກຕັ້ງຢູ່ແຂວງຊຽງຂວາງ ໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກຂອງທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ, ຫົວໜ້າອະນຸກຳມະການເລຂານຸການເລືອກຕັ້ງຂັ້ນແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ. ທ່ານ ວຽງໄຊ ສີວິໄລ ໄດ້ລາຍງານຜົນສຳເລັດການຈັດຕັ້ງປະຕິບັດການກະກຽມວຽກງານເລືອກຕັ້ງຂອງ ອລຂ ຂັ້ນແຂວງ ເຊິ່ງທ່ານໃຫ້ຮູ້ວ່າ: ສຳເລັດໄປແລ້ວ 3 ບາດກ້າວຄື: ບາດກ້າວທີ 1 ການກະກຽມບັນດາເອກະສານຕ່າງໆເພື່ອຮັບໃຊ້ໃນບັ້ນເລືອກຕັ້ງ, ບາດກ້າວທີ 2 ການຜັນຂະຫຍາຍ ເພື່ອນຳໄປຈັດຕັ້ງປະຕິບັດ, ບາດກ້າວທີ 3 ຕິດຕາມຊຸກຍູ້ ແລະ ຜັນຂະຫຍາຍ ວຽກງານຕ່າງໆເພື່ອການເລືອກຕັ້ງ; ຈາກນັ້ນ, ໄດ້ມີການສົນທະນາແລກປ່ຽນຄຳຄິດ ຄຳເຫັນເຊິ່ງກັນແລະກັນ ໂດຍສະເພາະວຽກງານຊຸກຍູ້ປຸກລະດົມຂະບວນການຕ່າງໆ, ຈັດຕັ້ງການໂຄສະນາຫາສຽງ, ເກັບກຳສະຖິຕິຈຳນວນຜູ້ມີສິດປ່ອນບັດ, ກະກຽມອຸປະກອນຮັບໃຊ້ການເລືອກຕັ້ງ, ແຈກຢາຍຮູບ-ຊີວະປະຫວັດຂອງຜູ້ສະໝັກຮັບເລືອກຕັ້ງ, ບັດລົງຄະແນນສຽງ, ຈັດຕັ້ງການເຊື່ອມຊຶມ ແລະ ເຜີຍແຜ່ບັນດາເອກະສານສຳຄັນທີ່ກ່ຽວກັບການເລືອກຕັ້ງ, ວຽກງານ ປກຊ-ປກສ.

ພ້ອມນັ້ນ, ຍັງໄດ້ລົງຕິດຕາມສະຖານທີ່ປ່ອນບັດຕົວຈິງຢູ່ຈຸດປ່ອນບັດເມືອງແປກ ແລະ ເມືອງພູກູດອີກດ້ວຍ.

**(ນາງ ອາລິນ ສຸພົມມະປະດິດ)**



# ຕິດຕາມກວດກາຄວາມພ້ອມກ່ອນ ເລືອກຕັ້ງຢູ່ແຂວງຫຼວງນ້ຳທາ



(ສພຂ)-ເພື່ອຮັບປະກັນໃຫ້ແກ່ການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV ຢູ່ເຂດເລືອກຕັ້ງທີ3 ແຂວງຫຼວງນ້ຳທາ ມີຜົນສຳເລັດຕາມລະດັບຄາດໝາຍ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມແຕ່ລະບາດກ້າວຕາມທີ່ໄດ້ກຳນົດໄວ້ໃນແຜນການດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ); ວັນທີ 21 ກຸມພານີ້, ທ່ານ ຈັນທະລາ ອຸດົມສຸກ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ກຳມະການກຳມາທິການຍຸຕິທຳ ທັງເປັນກຳມະການອະນຸກຳມະການເລຂານຸການ ຂອງ ຄລຊ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມກວດກາແລະເຮັດວຽກຮ່ວມກັບທ່ານ ກົງເພັດ ແກ້ວບົວພາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ທັງເປັນຫົວໜ້າອະນຸກຳມະການເລຂານຸການ ຂອງຄະນະກຳມະການເລືອກຕັ້ງແຂວງຫຼວງນ້ຳທາ ພ້ອມດ້ວຍອະນຸກຳມະການທີ່ກ່ຽວຂ້ອງ.

ທ່ານ ກົງເພັດ ແກ້ວບົວພາ ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານໂດຍຫຍໍ້ໃນການກະກຽມຄວາມພ້ອມໃຫ້ແກ່ການເລືອກຕັ້ງຢູ່ແຂວງຫຼວງນ້ຳທາ ເຊິ່ງມີຄວາມພ້ອມແລະສຳເລັດຫຼາຍວຽກງານ ເພື່ອຮັບປະກັນໃຫ້ແກ່ການປ່ອນບັດ ໃຫ້ໄດ້ 400% ຄື: ຮັບປະກັນໃຫ້ຜູ້ມີສິດປ່ອນບັດເລືອກຕັ້ງ ຕື່ນຕົວໄປໃຊ້ສິດດ້ວຍຕົນເອງ100%; ຮັບປະກັນບໍ່ໃຫ້ມີບັດຕາຍ100%; ຮັບປະກັນຄວາມສະຫງົບ100%; ຮັບປະກັນການປ່ອນບັດ, ການສັງລວມຄະແນນ ມີຄວາມໂປ່ງໃສ ແລະ ສະຫຼຸບລາຍງານວ່ອງໄວທັນເວລາ 100%.

ວັນດຽວກັນ, ທັງສອງພາກສ່ວນໄດ້ລົງຕິດຕາມກວດກາເບິ່ງຄວາມພ້ອມຮອບດ້ານຢູ່ສະຖານທີ່ປ່ອນບັດເລືອກຕັ້ງຕົວຈິງຄື: ໜ່ວຍປ່ອນບັດສະໂມສອນຂອງແຂວງ, ໜ່ວຍປ່ອນບັດບ້ານວຽງຄຳ, ໜ່ວຍປ່ອນບັດບ້ານນາຫ້ອມ ແລະ ໜ່ວຍປ່ອນບັດບ້ານວຽງເໜືອ ເມືອງຫຼວງນ້ຳທາ.

**(ນາງ ວັນນີ ແຝງບົວວັນ)**

## ອະນຸກຳມະການ...

(ຕໍ່ຈາກໜ້າ 1)

ວຽກງານຕ່າງໆ ຕາມມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ຂອງຂັ້ນເທິງ; ວັນທີ 19-21 ກຸມພານີ້, ທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ, ກຳມະການອະນຸກຳມະການເລຂານຸການ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາວຽກງານຮອບດ້ານການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV ຢູ່ແຂວງໄຊຍະບູລີ.

ທ່ານ ປອ. ສີສອນພັນ ບຸນລີຮອງເລຂາພັກແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານກະກຽມໃຫ້ແກ່ການເລືອກຕັ້ງຢູ່ແຂວງໄຊຍະບູລີ ເຊິ່ງທ່ານໃຫ້ຮູ້ວ່າ: ໄລຍະຜ່ານມາແຂວງໄຊຍະບູລີ ໄດ້ສຳເລັດການເກັບກຳ, ສັງລວມ ສະຖິຕິຈຳນວນພົນລະເມືອງ ຕາມການສຳຫຼວດພົນລະເມືອງປີ 2025 ໃນທົ່ວແຂວງ ມີພົນລະເມືອງ 412,725 ຄົນ ຍິງ 202,589 ຄົນ ໃນນີ້ຜູ້ມີສິດປ່ອນບັດເລືອກຕັ້ງຕາມສຳມະໂນຄົວ 297,507 ຄົນ ຍິງ 146,160 ຄົນ, ຜູ້ສາມາດປ່ອນບັດຢູ່ໃນບ້ານຂອງຕົນ 260,970 ຄົນ ຍິງ 129,078 ຄົນ, ຜູ້ມີສິດປ່ອນບັດຢູ່ທ້ອງຖິ່ນອື່ນ 16,203 ຄົນ ຍິງ 6,824, ຜູ້ໄປເຮັດວຽກຢູ່ຕ່າງປະເທດ 20,334 ຄົນຍິງ 10.258 ຄົນ, ຜູ້ມີສິດປ່ອນບັດຈາກທ້ອງຖິ່ນອື່ນ 2,096 ຄົນ ຍິງ 602 ຄົນ; ມີ 500 ໜ່ວຍປ່ອນບັດເລືອກຕັ້ງ ໃນນີ້ ມີ 3 ໜ່ວຍປ່ອນບັດເຄື່ອນທີ່ (ເມືອງໄຊຍະບູລີ 1 ໜ່ວຍ, ເມືອງຫົງສາ 1 ໜ່ວຍ ແລະ ເມືອງບໍ່ແຕນ 1 ໜ່ວຍ); ສຳລັບສະຖານທີ່ປ່ອນບັດ ແມ່ນກຳນົດເອົາສະໂມສອນຂອງບ້ານ, ສ່ວນການກະກຽມສະຖານທີ່ປ່ອນບັດສຳລັບການນຳຂັ້ນສູງຂອງພັກ-ລັດ ກໍຄືຂອງແຂວງ ແມ່ນກຳນົດເອົາຈຸດໂຮງຮຽນການເມືອງ ແລະ ການປົກຄອງແຂວງ ເຊິ່ງກຳນົດເປັນໜ່ວຍປ່ອນບັດຮ່ວມກັບບ້ານດອນໃໝ່; ສຳເລັດການຂຶ້ນບັນຊີຫີບບັດ, ທຸງຊາດ-ທຸງພັກ ແລະ ຮູບປະທານ ໄກສອນ ພົມວິຫານ ເຊິ່ງມີຫີບປ່ອນບັດທີ່ສາມາດນຳໃຊ້ໄດ້ 636 ຫີບ ຕ້ອງການເພີ່ມ 364 ຫີບ, ທຸງຊາດ-ທຸງພັກ ມີແລ້ວ 16 ຜືນ ຕ້ອງການເພີ່ມ 484 ຜືນ, ຮູບປະທານ ໄກສອນ ພົມວິຫານ ມີແລ້ວ 52 ໃບ ຕ້ອງການເພີ່ມ 446 ໃບ.

ຈາກນັ້ນ, ໄດ້ມີການແລກປ່ຽນສົນທະນາບັນຫາຕ່າງໆເປັນຕົ້ນແມ່ນຂໍ້ສະດວກ, ຂໍ້ຫຍຸ້ງຍາກທີ່ຕິດພັນກັບວຽກງານກະກຽມ ແລະດຳເນີນການເລືອກຕັ້ງຂອງແຕ່ລະເມືອງ ເພື່ອຮັບປະກັນຄວາມພ້ອມຮອບດ້ານໃຫ້ແກ່ການເລືອກຕັ້ງຄັ້ງນີ້ ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ພ້ອມທັງເກັບກຳຄຳສະເໜີ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ; ນອກນີ້, ຄະນະຮັບຜິດຊອບຍັງໄດ້ລົງກວດກາຕົວຈິງບັນຍາກາດແລະສະຖານທີ່ປ່ອນບັດເລືອກຕັ້ງຢູ່ເມືອງພຽງ, ເມືອງທົ່ງມີໄຊ ແລະ ເມືອງປາກລາຍ ໃນການຈັດຕັ້ງປະຕິບັດຕາມມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ຂອງຂັ້ນເທິງ ເພື່ອລາຍງານ ຄລຊ.

**(ນາງ ອານິຕາ ມ່ວນສະຫວັດ)**

## ປະກາດລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສສນວ ຊຸດທີ V



(ສພຊ) - ວັນທີ 27 ກຸມພາຜ່ານມາ, ທ່ານ ນາງ ລຳພອຍສີອັກຄະຈັນ, ຮອງປະທານສະພາປະຊາຊົນ ນະຄອນຫຼວງວຽງຈັນ, ຮອງປະທານ(ຜູ້ປະຈຳການ) ຄະນະກຳມະການເລືອກຕັ້ງ ນະຄອນຫຼວງວຽງຈັນ, ໄດ້ຕາງໜ້າ ໃຫ້ຄະນະກຳມະການເລືອກຕັ້ງ ນະຄອນຫຼວງວຽງຈັນ ປະກາດແຈ້ງການ ລາຍຊື່ຜູ້ໄດ້ຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V.

ອີງຕາມ ມາດຕາ 29 ກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ, ມາດຕາ37 ກ່ຽວກັບການນັບຄະແນນສຽງ, ມາດຕາ 40 ກ່ຽວກັບຜູ້ໄດ້ຮັບການເລືອກຕັ້ງ, ມາດຕາ 44 ກ່ຽວກັບການປະກາດຜົນການເລືອກຕັ້ງກົດໝາຍວ່າດ້ວຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 58/ສພຊ, ລົງວັນທີ 28 ມິຖຸນາ 2024.

ຄະນະກຳມະການເລືອກຕັ້ງ ນະຄອນຫຼວງວຽງຈັນ ປະກາດລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ຢູ່ເຂດເລືອກຕັ້ງເມືອງຕ່າງໆ ໃນນະຄອນຫຼວງວຽງຈັນມີຈຳນວນທັງໝົດ 45 ທ່ານ, ຍິງ 13 ທ່ານ, ເຊິ່ງໃນແຕ່ລະເຂດເລືອກຕັ້ງເມືອງ ປະກອບມີຜູ້ໄດ້ຮັບເລືອກຕັ້ງ ດັ່ງລາຍລະອຽດຕາມປະກາດ ແຈ້ງການ ສະບັບເລກທີ 065/ຄລ.ນວ, ລົງວັນທີ 27 ກຸມພາ 2026 ຂອງຄະນະກຳມະການເລືອກຕັ້ງ ນະຄອນຫຼວງວຽງຈັນ ຄື:

**1.ເຂດເລືອກຕັ້ງເມືອງຈັນທະບູລີມີຈຳນວນ05ທ່ານ, ຍິງ 03 ທ່ານ ຄື:**

1) ທ່ານ ນາງ ສຸມາລີ ທຳມະວົງ;

2) ທ່ານ ພົທ ວິລະພົນ ໄພບູນ;

3) ທ່ານ ສຸພາ ເຮືອງແກ່ນທ່ານ;

4) ທ່ານ ນາງ ຄຳສີ ວົງວິໄລ;

5) ທ່ານ ນາງ ສຸກສະຫວັນ ວັນໃນລາດ.

**2.ເຂດເລືອກຕັ້ງເມືອງສີໂຄດຕະບອງ ມີຈຳນວນ 5 ທ່ານ, ຍິງ 02 ທ່ານ ຄື:**

1) ທ່ານ ອິນປອງ ທຸມມາ;

2) ທ່ານ ພອນສະຫວັດ ອອນລັດບຸນມີ;

3) ທ່ານ ດຣ. ໄຊຍະວົງ ດວງມະນີ;

4) ທ່ານ ນາງ ສີສຸດາ ເພັງພົງສະຫວັດ;

5) ທ່ານ ນາງ ດາໄລວັນ ແກ້ວນະຄອນ.

**3.ເຂດເລືອກຕັ້ງເມືອງໄຊເສດຖາ ມີຈຳນວນ 5 ທ່ານ, ຍິງ 02 ທ່ານ ຄື:**

1) ທ່ານ ປອ. ນາງ ບົວວອນ ສຸກລາແສງ;

2) ທ່ານ ນາງ ພິດສະໄໝ ຕົ້ນສະຫວັນ;

3) ທ່ານ ດຣ. ຈັນທະໄລ ໄຊຍະວົງ;

4) ທ່ານ ຄຳສິງ ພົມມະຈັກ;

5) ທ່ານ ພົທ ຖາວອນ ດາມະນີວົງ.

**4.ເຂດເລືອກຕັ້ງເມືອງສີສັດຕະນາກ ມີຈຳນວນ 05 ທ່ານ ຄື:**

1) ທ່ານ ອະໂນໄທ ຈັນທະລາສີ;

2) ທ່ານ ສຸລິຍະ ສະວິສຸກ;

3) ທ່ານ ບຸນທະວີ ສີແສນດີ;

4) ທ່ານ ສິງຫາ ວົງພັກດີ;

5) ທ່ານ ວິຣະໄຊຄຳ ພິລາພັນເດຊ.

**5.ເຂດເລືອກຕັ້ງເມືອງນາຊາຍທອງ ມີຈຳນວນ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ສຸລິວັນ ພົມມະຫາໄຊ;

2) ທ່ານ ນາງ ພູເພັດ ແກ້ວບັນດິດ;

3)ທ່ານຈັນມາລາກຸສົນ;

4)ທ່ານຄູນໄຊ ມະນີວົງ;

5) ທ່ານ ຄຳຕົ້ນ ແກ້ວຫາວົງ.

**6.ເຂດເລືອກຕັ້ງເມືອງໄຊທານີ ມີຈຳນວນ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ວຽງຄຳ ສີຫາໂຄດ;

2) ທ່ານ ດຣ. ບຸນທະວີ ເດດບັນດິດ;

3) ທ່ານ ດ່າຍ ສີຫາລາດ;

4) ທ່ານ ນາງ ບົວຄຳ ປະດັບດີ;

5) ທ່ານ ໜູຄຳ ພົນທະວົງ.

**7.ເຂດເລືອກຕັ້ງເມືອງຫາດຊາຍຟອງ ມີຈຳນວນ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ຄຳໜູນ ຕຽງທະລາດ;

2) ທ່ານ ນາງ ສ້ອຍສຸດາ ອິນເມືອງໄຊ;

3) ທ່ານ ສັກດາ ອາດວາລີ;

4) ທ່ານ ສອນປະສິດ ສຸວັນນະເມືອງ;

5) ທ່ານ ດຣ. ແສງທິບ ໄຊຍະສານ.

**8.ເຂດເລືອກຕັ້ງເມືອງປາກງື່ມ ມີຈຳນວນ 05 ທ່ານ, ຍິງ 02 ທ່ານ ຄື:**

1) ທ່ານ ແກ້ວປະເສີດ ໄຊປັນຍາ;

2) ທ່ານ ປອ. ສົມໃຈ ຫວັງ ເດດອຸດົມ;

3) ທ່ານ ນາງ ຈັນທະຄານ ຊາມຸນຕີ;

4) ທ່ານ ນາງ ອານຸລັກ ສີລາວົງ;

5) ທ່ານ ບຸນ ຄຳສຸກ ຖາວົງ.

**9. ເຂດເລືອກຕັ້ງເມືອງສັງທອງ ມີຈຳນວນ 05 ທ່ານ, ຍິງ 01 ທ່ານ ຄື:**

1) ທ່ານ ຄຳສວຍ ອຸ່ນດາລາ;

2) ທ່ານ ວັນນະສອນ ກຸມພົນ;

3) ທ່ານ ຂັນໄຊ ແສງສຸນີ;

4) ທ່ານ ນາງ ເກສອນ ຂວັນພະໄຊ;

5) ທ່ານ ຄອນສະຫວັນ ສິງຫາລາດ.

**(ສະພາປະຊາຊົນ ນະຄອນຫຼວງວຽງຈັນ)**

## ຖະແຫຼງຂ່າວຜົນການເລືອກຕັ້ງສະມາຊິກ ສະພາປະຊາຊົນແຂວງຜົ້ງສາລີ ຊຸດທີ V



(ສພຊ) - ໂດຍອີງຕາມ ມາດຕາ 29, 30, 44 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 58/ສພຊ, ລົງວັນທີ 28 ມິຖຸນາ 2024 ແລະ ບົດບັນທຶກຜົນການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງຊຸດທີV ຂອງບັນດາເມືອງ 7 ເມືອງໃນທົ່ວແຂວງ ແລະ ວັນທີ 3 ມີນານີ້, ຢູ່ທີ່ສະພາປະຊາຊົນແຂວງ ທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງ ຜົ້ງສາລີ ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ ຖະແຫຼງຂ່າວຜົນການເລືອກຕັ້ງສະມາຊິກສະພາປະຊາຊົນແຂວງ ຊຸດທີV ຕາມປະກາດແຈ້ງການຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ສະບັບເລກທີ 81/ຄລຂ, ລົງວັນທີ 2 ມີນາ 2026 ກ່ຽວກັບລາຍຊື່ຜູ້ໄດ້ຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ຢູ່ເຂດເລືອກຕັ້ງບັນດາເມືອງ ໃນທົ່ວແຂວງ ມີຈຳນວນທັງໝົດ 35 ທ່ານ, ຍິງ 8 ທ່ານ ເຊິ່ງປະກອບມີ ດັ່ງນີ້:

**1. ເຂດເລືອກຕັ້ງທີ 1 ເມືອງ ຜົ້ງສາລີ: ມີຈຳນວນ 5 ທ່ານ, ຍິງ 1 ທ່ານຄື:**

1 ທ່ານ ບຸນສະຫວາດ ສີວົງໄຊ;

2.ທ່ານ ພອນໄຊ ແກ້ວສົມພັນ;

3. ທ່ານບຸນສອນແກ້ວວິໄລ;

4. ທ່ານ ສຸວັນຟູ ລາວລີ;

5. ທ່ານ ນາງ ສີມົນຈັນເສັດ;

**2. ເຂດເລືອກຕັ້ງທີ 2 ເມືອງໃໝ່: ມີຈຳນວນ 5 ທ່ານ, ຍິງ 1 ທ່ານ.**

1. ທ່ານ ພອນທະວີ ໄຊມົນຕີ;

2. ທ່ານ ຄຳໄຊ ສູນວິເລີດ;

3. ທ່ານ ສົມແປນ ວົງອິນປອນ;

4. ທ່ານ ຄຳຮຽງ ພົມມະສິດ,

5. ທ່ານ ນາງ ສຸກນາວອນ ມະນີວົງ.

**3. ເຂດເລືອກຕັ້ງທີ 3 ເມືອງຂວາ: ມີຈຳນວນ 5 ທ່ານ, ຍິງ 1 ທ່ານ.**

1. ທ່ານ ສອນສະໜຸກ ສີສຸລາດ;

2. ທ່ານ ຄຳເພັດ ຈິດປັນຍາ;

3. ທ່ານ ສຸວັນນີ ສຸລິຍະພອນ;

4. ທ່ານ ສຸຫວັນ ແສງຈັນສຸກ;

5. ນາງ ຈັນເພັງ ມະນີສຸກ;

**4. ເຂດເລືອກຕັ້ງທີ 4 ເມືອງ ສຳພັນ: ມີຈຳນວນ 5 ທ່ານ, ຍິງ 1 ທ່ານ.**

1. ທ່ານ ທອງຕີ ເກຍສະບົງ;

2. ທ່ານ ອ່ອນຄຳ ອິນແສງ,

3. ທ່ານ ນາງ ຈັນສະໄໝ ລາວຊ່ຽວ;

4. ທ່ານ ທອງຄຳ ວິໄລຈິດ;

5. ທ່ານ ແອ ບົວລະວົງສາ;

**5. ເຂດລືອກຕັ້ງທີ 5 ເມືອງບຸນເໜືອ: ມີຈຳນວນ 5 ທ່ານ, ຍິງ 1 ທ່ານ.**

1. ທ່ານ ສົມພາບ ດາລາຈັກ;

2. ທ່ານ ສຸວັນທອນ ສຸລີໃຈ;

3. ທ່ານ ສົມສະຫວ່າງ;

4. ທ່ານ ແສງສະຫວ່າງ ຈິດທະວົງ;

5. ທ່ານ ນາງ ບົວສະໄໝ ລີລາວົງ

**6. ເຂດເລືອກຕັ້ງທີ 6 ເມືອງ ຍອດອູ: ມີຈຳນວນ 5 ທ່ານ ຍິງ 1 ທ່ານ.**

1. ທ່ານ ສົມຫວັງ ສຸມວິໄລ;

2. ທ່ານ ພັອ ບົວເງິນ ສີທິວົງ;

3. ທ່ານ ທອງມາລີ ຈັນພະທອງ;

4. ທ່ານ ຄຳພອນ ໄຊຍະມານ;

5. ທ່ານ ນາງ ວັນຄຳ ດວງຈັນ;

**7. ເຂດເລືອກຕັ້ງທີ 7 ເມືອງບຸນໃຕ້: ມີຈຳນວນ 5 ທ່ານ, ຍິງ 2 ທ່ານ.**

1. ທ່ານ ທອງສິງ ອິນທະແສງ;

2. ທ່ານ ພອນສຸຈິດ ລີລາວົງ;

3. ທ່ານວິຄຳ ມະວົງສາ;

4. ທ່ານ ນາງ ບົວວອນ ຈັນທະລັງ;

5. ທ່ານ ນາງ ສີແພ ຄູນມະນີ:

**(ແກ້ວສະໜ່ວາງ ໄຊຍະເງິນ)**



# ປະກາດລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ຊຸດທີ V



(ສພຂ) - ວັນທີ 27 ກຸມພານີ້, ຢູ່ທີ່ສະພາປະຊາຊົນແຂວງຫຼວງນ້ຳທາ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງຫຼວງນ້ຳທາໄດ້ຖະແຫຼງການກ່ຽວກັບຜົນການປ່ອນບັດເລືອກຕັ້ງ ສະມາຊິກສະພາປະຊາຊົນແຂວງຫຼວງນ້ຳທາຊຸດທີ V ໃນວັນທີ 22 ກຸມພາ 2026, ຊຶ່ງປະກອບມີຜູ້ລົງສະໝັກຮັບເລືອກຕັ້ງ ຈຳນວນ 35 ທ່ານ, ຍິງ 10 ທ່ານ,

ຜ່ານການປ່ອນບັດເລືອກຕັ້ງຕົວຈິງ ໃນວັນທີ 22 ກຸມພາຜ່ານມານີ້; ຜ່ານການສັງລວມຄະແນນ ສາມາດ ເລືອກຕັ້ງໄດ້ຜູ້ທີ່ເປັນສະມາຊິກສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ V ຈຳນວນ 25 ທ່ານ, ຍິງ 8 ທ່ານ ດັ່ງນີ້; ເມືອງຫຼວງນ້ຳທາ ມີ 5 ທ່ານ, ຍິງ 2 ທ່ານ: ທ່ານ ບຸນຄົງ ພົມມະສອນ, ທ່ານ ຄຳເຜີຍ ບຸດດີ, ທ່ານ ນາງ ຈັນຄຳ ລໍວັນກູ່, ທ່ານ ນາງຄຳພົ້ວ ໄຊປະເສີດ, ທ່ານ ທະວີພອນ ສີວິໄລແຮ່ຄຳ; ເມືອງສິງ ມີ 5 ທ່ານ, ຍິງ 2 ທ່ານ: ທ່ານ ໜານມອນ ແກ້ວສິງໄຊ, ທ່ານ ເກດແກ້ວ ປິນແສນອິນ, ທ່ານ ດຣ ສົມພັດ ສໍຈຳປາ, ທ່ານ ນາງ ແສງຕານ ພຸມຍະວົງ, ທ່ານ ນາງ ບົວສອນ ແສນຍອດ; ເມືອງລອງ ມີ 5 ທ່ານ, ຍິງ 1 ທ່ານ: ທ່ານ ຊຽງ ຫຸມພັນ ຈັນທະວົງ, ທ່ານ ນາງ ພອນ ຫຼ້າວົງຄຳ, ທ່ານ ເພັດສະຫວັນ ຈິດດາລາ, ທ່ານ ອິງ ແສງທະລາ, ທ່ານ ຄຳໄຊ ວິໄລສັກ; ເມືອງວຽງພູຄາ ມີ 5 ທ່ານ, ຍິງ 2 ທ່ານ: ທ່ານ ບຸນຊົງ ວາໄຊຍີ, ທ່ານ ນາງ ວຽງຄຳ ອິນປະເສີດ, ທ່ານວຽງໄຊສັກລຳດວນ, ທ່ານ ໜໍສະຫວັດ ເພັດມະນີ, ທ່ານ ນາງແສງທອງຊຽນປັນຍາແລະເມືອງນາແລ ມີ 5 ທ່ານ, ຍິງ 1 ທ່ານ: ທ່ານ ບຸນປີ ໄລປະເສີດ, ທ່ານ ທຳມະວົງ ບຸນຖາວອນ, ທ່ານບົວເງິນດວງປະເສີດ, ທ່ານ ພົທ. ກຳມະນີ ມິດລະແສນ, ທ່ານ ນາງ ມະນີພອນ ໂດຍສີປະເສີດ.

ພາຍຫຼັງຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງ, ບັນດາອົງການຈັດຕັ້ງຂອງພັກ, ລັດ ແລະອົງການ ຈັດຕັ້ງມະຫາຊົນແຕ່ລະຂັ້ນ ໄດ້ຮັບປະກາດແຈ້ງການສະບັບນີ້ແລ້ວ ສະເໜີໃຫ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມພາຍໃນຂະແໜງການຂອງຕົນ ຢ່າງທົ່ວເຖິງ ແລະ ທັນເວລານັບແຕ່ມື້ໄດ້ແຈ້ງການສະບັບນີ້ເປັນຕົ້ນໄປ, ສ່ວນຜູ້ຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແມ່ນຄະນະກຳມະການເລືອກຕັ້ງລະດັບຊາດຈະປະກາດ ແຈ້ງການ ຕາມກົດໝາຍ.

**(ນາງ ວັນນີ ແຝງບົວວັນ)**




## ບັນຍາກາດ...

(ຕໍ່ຈາກໜ້າ 1)

ບັນຍາກາດການປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງຊຸດທີ V ຢູ່ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໂດຍສະເພາະຢູ່ຈຸດທີ I: ບ້ານໄຊຍະພູມ(ໂຮງຮຽນປະຖົມບ້ານໄຊຍະພູມ) ແມ່ນມີຄວາມຄຶກຄື້ນ ເຊິ່ງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ໄປໃຊ້ສິດປະຊາທິປະໄຕປ່ອນບັດຢູ່ຈຸດດັ່ງກ່າວ.

ແຂວງສະຫວັນນະເຂດ ມີພົນລະເມືອງ 1,117,799 ຄົນ ຍິງ 555,896 ຄົນ, ມີຜູ້ມີສິດເລືອກຕັ້ງ (ຕາມສຳມະໂນຄົວ ແລະ ຈາກທ້ອງຖິ່ນອື່ນ) 728,785 ຄົນ ຍິງ 369,703 ຄົນ; ທົ່ວແຂວງມີ 889 ໜ່ວຍປ່ອນບັດ ໃນນັ້ນມີ 9 ໜ່ວຍປ່ອນບັດເຄື່ອນທີ່.



# ຄະນະກຳມະການເລືອກຕັ້ງແຂວງໄຊຍະບູລີ ປະກາດລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ຊຸດທີ V



(ສພຂ) - ວັນທີ 27 ກຸມພາຜ່ານມາ, ທ່ານ ນາງ ວິລະພອນ ທອງພິມ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ກຳມະການ ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຮອງຫົວໜ້າອະນຸກຳມະການໂຄສະນາ... ໂຄງປະກອບ ແລະ ບຸກຄະລາກອນ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນພາຍໃນແຂວງກ່ຽວກັບຜົນການເລືອກຕັ້ງສະມາຊິກສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ V.

ໂດຍອີງຕາມ ມາດຕາ 29 ກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ, ມາດຕາ 37 ກ່ຽວກັບການນັບຄະແນນສຽງ, ມາດຕາ 40 ກ່ຽວກັບຜູ້ໄດ້ຮັບການເລືອກຕັ້ງ, ມາດຕາ 44 ກ່ຽວກັບການປະກາດຜົນການເລືອກຕັ້ງ ກົດໝາຍວ່າດ້ວຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 58/ສພຊ, ລົງວັນທີ 28 ມິຖຸນາ 2024; ອີງຕາມ ປະກາດແຈ້ງການລາຍຊື່ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ຊຸດທີ V ສະບັບເລກທີ 57/ຄຂລ.ຊຍ, ລົງວັນທີ 27 ກຸມພາ 2026.

ຄະນະກຳມະການເລືອກຕັ້ງຂັ້ນແຂວງ ຂໍປະກາດແຈ້ງການກ່ຽວກັບຜູ້ໄດ້ຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ V ເຊິ່ງມີຈຳນວນລວມທັງໝົດ 55 ທ່ານ; ຍິງ 18 ທ່ານ ລະອຽດມີລາຍຊື່ດັ່ງລຸ່ມນີ້:

**1) ເລືອກຕັ້ງເມືອງໄຊຍະບູລີ ຈຳນວນ 6 ທ່ານ, ຍິງ 2 ທ່ານ:**

1. ທ່ານ ຄຳຫຼ້າ ຜິວວັນນາ ກຳມະການປະຈຳພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ປະລິນຍາເອກ ນາງ ໄມພອນ ເຮີ ຄະນະໜ່ວຍພັກ, ຮອງຫົວໜ້າໂຮງຮຽນການເມືອງແລະການປົກຄອງແຂວງ;
3. ທ່ານພັນໂທຄຳພາວ ມະໄລທອງ ເລຂາຄະນະພັກຮາກຖານ, ຫົວໜ້າກອງພັນເຄື່ອນທີ່ກອງບັນຊາການປ້ອງກັນຄວາມສະຫງົບແຂວງ;
4. ທ່ານ ລີຄິດ ແຊ່ເຕີນ ກຳມະການພັກເມືອງ, ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ;
5. ທ່ານ ນາງ ບົວວົງ ສີຕັນ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ;
6. ທ່ານ ສີວິໄຊ ພົນທະຈັກ ປະທານສະມາຄົມນັກທຸລະກິດໜຸ່ມແຂວງໄຊຍະບູລີ.

**2) ເຂດເລືອກຕັ້ງເມືອງຄອບ ຈຳນວນ 5 ທ່ານ, ຍິງ 2 ທ່ານ:**

1. ທ່ານ ສົມນຶກ ສິງຄຳ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ພັນໂທ ປະລິນຍາເອກ ພູເຂົາຄຳ ທີແກ້ວ ຄະນະພັກຮາກຖານ, ຮອງຫົວໜ້າຫ້ອງການກອງບັນຊາການທະຫານແຂວງ;
3. ທ່ານ ນາງ ສາຍຄຳ ເພັດປັນຍາ ຄະນະໜ່ວຍພັກ, ຮອງປະທານສະຫະພັນແມ່ຍິງແຂວງ;
4. ທ່ານ ສົມທັນ ທອງວັນນາ ກຳມະການພັກເມືອງ;
5. ທ່ານ ນາງ ຕ້ອຍ ກອງຊັບ ກຳມະການພັກເມືອງ, ຫົວໜ້າຄະນະໂຄສະນາອົບຮົມເມືອງ.

**3) ເຂດເລືອກຕັ້ງເມືອງຊຽງຮ່ອນ ຈຳນວນ 5 ທ່ານ, ຍິງ 2 ທ່ານ:**

1. ທ່ານ ແສງອາທິດ ລາວເປູຍຢາທໍ່ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ດ່ອກເຕີ ລາດສະວົງ ລັດສະໝີ ຮອງເລຂາຄະນະພັກຮາກຖານ, ຮອງຫົວໜ້າພະແນກສາທາລະນະສຸກແຂວງ;
3. ທ່ານ ນາງ ສັງຄີ ພົງພັນ ຮອງຈຸພັກ, ຄະນະບໍລິຫານງານສະຫະພັນແມ່ຍິງແຂວງ, ຫົວໜ້າຂະແໜງ ແຜນການ, ການເງິນ ແລະ ການກວດສອບຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ;
4. ທ່ານ ນາງ ເໜືອຍ ໄຊວຸດ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ;
5. ທ່ານ ບຸນທຳ ພຸດທອງຄຳ ຮອງປະທານກວດກາໜ່ວຍພັກ, ຮອງຫົວໜ້າຫ້ອງວ່າການເມືອງ.

**4) ເຂດເລືອກຕັ້ງເມືອງເງິນ ຈຳນວນ 5 ທ່ານ, ຍິງ 2 ທ່ານ:**

1. ທ່ານ ທອງພັນ ສຸກສະຫວັດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ນາງ ແສງທອງ ແພງດີ ຮອງເລຂາໜ່ວຍພັກ, ຮອງປະທານແນວລາວສ້າງຊາດແຂວງ;
3. ທ່ານ ໄຊພອນ ສີລີສົມບັດ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ;
4. ທ່ານ ນາງ ວຽງທອງ ສີຫາວົງ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ;
5. ທ່ານ ແນັກຊົນ ສົມສັກ ປະທານສະມາຄົມນັກທຸລະກິດໜຸ່ມເມືອງ.

**5) ເຂດເລືອກຕັ້ງເມືອງທົ່ງສາ ຈຳນວນ 5 ທ່ານ, ຍິງ 2 ທ່ານ:**

1. ທ່ານ ສີທະນົນໄຊ ທອງເທພາກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ເສັງວິໄລ ສົງ ຮອງຈຸພັກ, ວ່າການປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ;
3. ທ່ານ ນາງ ວຽງຄຳ ຈັນທະວົງ ເລຂາໜ່ວຍພັກ, ປະທານສະຫະພັນກຳມະບານແຂວງ;
4. ທ່ານ ວັນໄຊ ຢົວລໍວື ກຳມະການພັກເມືອງ, ຫົວໜ້າຫ້ອງການຍຸຕິທຳເມືອງ;
5. ທ່ານ ນາງ ຄຳວົງ ແກ້ວມູນລັດ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ.

ອ່ານຕໍ່ໜ້າ 9

# ຖະແຫຼງຂ່າວຜົນການເລືອກຕັ້ງ ສສຂ ບໍ່ແກ້ວ ຊຸດທີ V



(ສພຂ)- ວັນທີ 26 ກຸມພາຜ່ານມານີ້, ທ່ານ ຈອມສີ ລັດຕະນະປັນ ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ຖະແຫຼງຂ່າວແຈ້ງຜົນເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ V ມີທັງໝົດ 25 ທ່ານ, ຍິງ 5 ທ່ານ, ທີ່ປະຊາຊົນຜູ້ມີສິດປ່ອນບັດເລືອກຕັ້ງໄດ້ໄວ້ວ່າງໃຈໃຫ້ເປັນຕົວແທນຂອງຕົນທີ່ຈະໄດ້ເຂົ້າໄປນັ່ງໃນສະພາ ເພື່ອນຳເອົາບັນຫາຕ່າງໆຂອງປະຊາຊົນບັນດາເຜົ່າໄດ້ສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງຕ່າງໆຢູ່ໃນສະພາ ເພື່ອເປັນຕົວແທນສິດແຫ່ງຜົນປະໂຫຍດອັນຊອບທຳຂອງປະຊາຊົນຢ່າງແທ້ຈິງ; ລາຍຊື່ຜູ້ທີ່ໄດ້ຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ V ເຊິ່ງປະກອບມີຈຳນວນ 25 ທ່ານ, ຍິງ 05 ທ່ານ ລາຍລະອຽດແຕ່ລະເຂດເລືອກຕັ້ງຂັ້ນເມືອງ ມີລາຍຊື່ດັ່ງລຸ່ມນີ້:

**I. ເຂດເລືອກຕັ້ງເມືອງຫ້ວຍຊາຍ: ຈຳນວນ 05 ທ່ານ, ຍິງ 01 ທ່ານ ປະກອບມີ:**

1) ທ່ານ ຈອມແພງ ວິໄລສານ ກຳມະການປະຈຳພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ.

2) ທ່ານ ພັນເອກ ອຸດົມ ໄຊຍົມປັນຍາຮອງຫົວໜ້າການເມືອງ, ຫົວໜ້າຫ້ອງການເມືອງກອງບັນຊາການທະຫານແຂວງ;

3) ທ່ານ ອຳພອນ ລໍມີໄຊ ກຳມະການພັກເມືອງ, ຫົວໜ້າຄະນະໂຄສະນາອົບຮົມເມືອງ, ສສຂ ຊຸດທີ IV.

4) ທ່ານ ນາງ ອຳພອນ ບຸນຍາວົງ ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າສະພາປະຊາຊົນແຂວງ.

5) ທ່ານ ເທວາ ຊົງ ກຳມະການພັກເມືອງ, ຮອງຫົວໜ້າຫ້ອງການການເງິນເມືອງ.

**II. ເຂດເລືອກຕັ້ງເມືອງຕົ້ນເຜີ້ງ: ຈຳນວນ 05 ທ່ານ, ຍິງ 01 ທ່ານ ປະກອບມີ:**

1) ທ່ານ ອຸ່ນຄຳ ທຳມະເລີດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ.

2) ທ່ານ ຄຳຈັນ ວັນນະວົງ ກຳມະການພັກເມືອງ, ຮອງປະທານຄະນະກວດກາພັກ-ລັດເມືອງ.

3) ທ່ານ ສາຍຄຳ ຄຳປະເສີດ ກຳມະການໜ່ວຍພັກ, ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ.

4) ທ່ານ ນາງ ຄຳຫຼ້າ ຈິດຕະພົງ ຮອງເລຂາທິການສະພາປະຊາຊົນແຂວງ;

5) ທ່ານ ເປົາແກ້ວ ພູມສະຫວັນ ຮອງປະທານຄະນະກວດກາພັກ-ລັດແຂວງ.

**III. ເຂດເລືອກຕັ້ງເມືອງເມິງ: ຈຳນວນ 05 ທ່ານ, ຍິງ 01 ທ່ານ ປະກອບມີ:**

1) ທ່ານ ສີວິໄລ ສີແສນດີ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ.

2) ທ່ານ ນາງ ສາຍທອງ ອິນທະພອນ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ.

3) ທ່ານ ພັນໂທ ຈັນທອນ ແກ້ວສິງທອງ ຄະນະພັກຮາກຖານກອງບັນຊາການ ປກສ ເມືອງ, ຮອງຫົວໜ້າກອງບັນຊາການ ປກສ ເມືອງ, ສສຂ ຊຸດທີ IV.

4) ທ່ານ ດຣ ຄຳສິນ ພົມມະຫານ ກຳມະການພັກແຂວງ, ຫົວໜ້າພະແນກສາທາລະນະສຸກແຂວງ.

5) ທ່ານ ບົວຮອງ ແກ້ວສຸບັນ ຮັກສາການເລຂາທິການສະພາປະຊາຊົນແຂວງ.

**IV. ເຂດເລືອກຕັ້ງເມືອງຜາອຸດົມ: ຈຳນວນ 05 ທ່ານ, ຍິງ 01 ທ່ານ ປະກອບມີ:**

1) ທ່ານ ນາງ ມະນີຫວ່າງ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ.

2) ທ່ານ ນາງ ມະນີວັນ ພັນປະເສີດ ຮອງເລຂາພັກເມືອງ, ປະທານຄະນະກວດກາພັກ-ລັດເມືອງ, ສສຂ ຊຸດທີ IV.

3) ທ່ານ ວັນນະສອນ ໂພທິປັນຍາ ກຳມະການພັກແຂວງ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ

4) ທ່ານ ວຽງໄຊ ຈັນທະວົງ ກຳມະການພັກເມືອງ, ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ

5) ທ່ານ ບຸນຈັນ ດີປະເສີດ ຮອງຫົວໜ້າລັດວິສາຫະກິດໄຟຟ້າລາວສາຂາແຂວງບໍ່ແກ້ວ.

**V. ເຂດເລືອກຕັ້ງເມືອງປາກທາ: ຈຳນວນ 05 ທ່ານ, ຍິງ 01 ທ່ານ ປະກອບມີ:**

1) ທ່ານ ສາລີ ວັນນະສານ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ.

2) ທ່ານ ຄຳຈັນ ອິນທະຈັກ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ.

3) ທ່ານ ນາງ ອິນທອງ ເລືອງສີຈັນທອງ ຮອງເລຂາພັກເມືອງ, ຫົວໜ້າຄະນະຈັດຕັ້ງເມືອງ, ສສຂ ຊຸດທີ IV.

4) ທ່ານ ບຸນປະສິດ ຈັນທອງໃສ ກຳມະການພັກເມືອງ, ຫົວໜ້າຫ້ອງການວັດທະນະທຳ ແລະ ທ່ອງທ່ຽວເມືອງ

5) ທ່ານ ໄຊວາງ ຈູຈື່ງ ຮອງເລຂາທິການສະພາປະຊາຊົນແຂວງ.

ພາຍຫຼັງຄະນະກຳມະການເລືອກຕັ້ງຂັ້ນແຂວງ, ບັນດາອົງການຈັດຕັ້ງຂອງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ຂັ້ນເມືອງ ໄດ້ຮັບປະກາດແຈ້ງການສະບັບນີ້ແລ້ວ ໃຫ້ຈັດຕັ້ງການເຜີຍແຜ່ໃຫ້ຖັນແຖວສະມາຊິກພັກ, ພະນັກງານ, ລັດຖະກອນ, ທະຫານ-ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ທົ່ວແຂວງບໍ່ແກ້ວ ຮັບຮູ້ຢ່າງກວ້າງຂວາງ ແລະທົ່ວເຖິງ ນັບແຕ່ວັນໄດ້ຮັບປະກາດແຈ້ງການສະບັບນີ້ເປັນຕົ້ນໄປ. ດັ່ງນັ້ນ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ຈຶ່ງປະກາດມາເພື່ອຮັບຊາບຢ່າງເປັນທາງການ.

**(ບຸນຈັນ ມະນີໄຊ)**

# ປະກາດລາຍຊື່ຜູ້ທີ່ໄດ້ຮັບການເລືອກຕັ້ງ ເປັນ ສສຂ ຄຳມ່ວນ ຊຸດທີ V



(ສພຂ)- ວັນທີ 27 ກຸມພານີ້, ທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ, ກຳມະການຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຜູ້ປະຈຳການຄະນະກຳມະການເລືອກຕັ້ງແຂວງຄຳມ່ວນ ໄດ້ຕາງໜ້າໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບການປະກາດລາຍຊື່ຜູ້ທີ່ໄດ້ຮັບການເລືອກຕັ້ງເປັນ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຄຳມ່ວນ ຊຸດທີ V ເຊິ່ງມີຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ທັງໝົດ 50 ທ່ານ, ຍິງ 16 ທ່ານ ລາຍລະອຽດແຕ່ລະເຂດເລືອກຕັ້ງເມືອງ ມີລາຍຊື່ດັ່ງນີ້:

**ເຂດເລືອກຕັ້ງເມືອງທ່າແຂກ**

1. ທ່ານ ຄຳໝັ້ນ ສໍປະເສີດກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ຄຳຫຼວງ ອິນທະວົງ ປະທານບໍລິສັດ ຄຳມ່ວນການລົງທຶນ ຈຳກັດຜູ້ດຽວ, ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຂວງ;

3. ທ່ານເສົານາວາ ດວງມາລາ ຮອງຫົວໜ້າຂະແໜງຄຸ້ມຄອງການບັນຊີ ພະແນກການເງິນແຂວງ

4. ທ່ານ ນາງ ໄກ່ແກ້ວ ຜິວພັນ ກຳມະການພັກເມືອງ, ຮອງປະທານກວດກາພັກ-ລັດເມືອງ;

5. ທ່ານ ເພັດສະໝອນ ສັງສິນໄຊກຳມະການພັກເມືອງ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.

**ເຂດເລືອກຕັ້ງເມືອງມະຫາໄຊ**

1. ທ່ານ ອິນທະວົງ ພົມມະຈັນ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ຄຳສອນ ວົງຊະນະ ກຳມະການປະຈຳພັກເມືອງ, ຫົວໜ້າຄະນະໂຄສະນາອົບຮົມເມືອງ;

3. ທ່ານ ນິລະພົນ ສຸວັນນະລາດ ຮອງເລຂາທິການສະພາປະຊາຊົນແຂວງ;

4. ທ່ານ ປອ. ນາງ ສຸດປະເສີດ ສຸລິວົງ ຮອງຫົວໜ້າໂຮງຮຽນການເມືອງ ແລະ ການປົກຄອງແຂວງ;

5. ທ່ານ ສີສຸຫວັດ ຫຼວງປັນຍາ ກຳມະການພັກເມືອງ, ຮອງຫົວໜ້າຄະນະໂຄສະນາອົບຮົມເມືອງ.

**ເຂດເລືອກຕັ້ງເມືອງໜອງບົກ**

1. ທ່ານ ສຸລິນ ພົມມະໄຊກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ແກ້ວອຸດອນ ສິງທອງ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ;

3. ທ່ານ ສີສະຫວັດ ອາລຸນສະຫວັດຫົວໜ້າຂະແໜງບໍລິຫານ ແລະ ການເງິນ ສະພາປະຊາຊົນແຂວງ;

4. ທ່ານ ດຣ ອຸດົມພົງ ແກ້ວສີສະໂນ ຄະນະປະທານສະພາການຄ້າ ແລະ ອຸດສາຫະກຳແຂວງ;

5. ທ່ານ ນາງ ຂັນທະລີ ພົນເສນາ ຮອງປະທານຄະນະບໍລິຫານງານສະຫະພັນແມ່ຍິງເມືອງ.

**ເຂດເລືອກຕັ້ງເມືອງຫີນບູນ**

1. ທ່ານຄຳສິງ ອໍລະວັນ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ອຸດອນ ແກ້ວນາວົງ ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ;

3. ທ່ານ ນາງ ດາລຸນນີ ສີຫາລາດກຳມະການພັກເມືອງ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງເມືອງ;

4. ທ່ານ ບົວລາ ພົງພັກດີ ກຳມະການພັກເມືອງ, ຫົວໜ້າຫ້ອງການຍຸຕິທຳເມືອງ;

5. ທ່ານ ພັທ. ຄຳຟອງ ທອງມີສານ ຫົວໜ້າຫ້ອງຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານກອງບັນຊາການປກສ ແຂວງ.

**ເຂດເລືອກຕັ້ງເມືອງຍົມມະລາດ**

1. ທ່ານ ເຫຼັ້ງຄຳ ໄຊຄຳຜົນ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ອຸບົນລັດ ບົວຈູມ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ;

3. ທ່ານຄຳຮູ້ ວົງພະຈັນ ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ;

4. ທ່ານ ນາງ ແຫຼ້ ຫຼວງໄມໜັ້ນ ກຳມະການພັກເມືອງ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງເມືອງ;

5. ທ່ານ ດຣ. ເພັງຄານ ບຸນວາດສະໜາ ຜູ້ອຳນວຍການໂຮງຮຽນສາທາລະນະສຸກແຂວງ.

**ເຂດເລືອກຕັ້ງເມືອງບົວລະພາ**

1. ທ່ານ ພັອ ຄຳສິງ ນິນທະສອນ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ດຣ. ຖາວອນ ໄກຍະຣາຊຮອງຫົວໜ້າພະແນກສາທາລະນະສຸກແຂວງ;

3. ທ່ານ ສີທົນ ຈັນທະຈອນກຳມະການພັກເມືອງ, ຮອງປະທານກວດກາພັກ-ລັດເມືອງ;

4. ທ່ານ ນາງ ວຽງລ້ອມ ຊຽງຄຳຊຽວລິດເດດ ກຳມະການພັກເມືອງ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງເມືອງ;

5. ທ່ານບຸນເກີດ ສີກຽງຄຳ ຮອງຫົວໜ້າກອງບັນຊາການທະຫານເມືອງ.

**ເຂດເລືອກຕັ້ງເມືອງນາກາຍ**

1. ທ່ານ ນາງ ບົວກາ ແກ້ວມະນີກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ໜູຮັກ ພົມມະລິນ ກຳມະການພັກເມືອງ, ຮອງປະທານກວດກາພັກ-ລັດເມືອງ

3. ທ່ານ ນາງ ເພັດລຳມອນ ແກ້ວກັນຍາ ຮອງຫົວໜ້າພະແນກເຕັກໂນໂລຊີແລະການ

ອ່ານຕໍ່ໜ້າ 9

# ຖະແຫຼງຂ່າວຜົນການເລືອກຕັ້ງສະມາຊິກ ສະພາປະຊາຊົນແຂວງສະຫວັນນະເຂດ



(ສພຂ)-ວັນທີ 27 ກຸມພານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ, ທ່ານ ນາງ ພູທອນ ແກ້ວພູວົງ ຄະນະປະຈຳການຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຮອງຫົວໜ້າອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນຂັ້ນແຂວງ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນການເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ V ເຊິ່ງທ່ານກ່າວວ່າ: ຄະນະກຳມະການເລືອກຕັ້ງຂັ້ນແຂວງ ຂໍຖືເປັນກຽດປະກາດຜົນຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ຊຸດທີ V ຢູ່ເຂດເລືອກຕັ້ງປະຈຳເມືອງ, ນະຄອນ ໃນຂອບເຂດທົ່ວແຂວງ ດັ່ງນີ້:

**ນະຄອນໄກສອນພົມວິຫານ**

1 ທ່ານ ວາລີຍະ ສີຈັນທອງທິບ ກຳມະການປະຈຳພັກແຂວງ, ເລຂາພັກນະຄອນໄກສອນພົມວິຫານ

2 ທ່ານ ນາງ ແກ້ວອຸດອນ ໄຊຍັນທອນ ກຳມະການພັກນະຄອນ, ຮອງປະທານສານປະຊາຊົນເຂດ 1

3 ທ່ານ ທົງຄຳ ລີລາວັນ ກຳມະການພັກນະຄອນ, ຫົວໜ້າຫ້ອງການກະສິກຳແລະ ສິ່ງແວດລ້ອມ

4 ທ່ານ ນາງ ບົວລຽນ ເກດໂສພາພອນ ກຳມະການຮາກຖານ, ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ

5 ທ່ານ ພັທ ສາຄອນ ສີສຸກຄະນະພັກຮາກຖານ, ຮອງຫົວໜ້າກອງບັນຊາການ ປກສ ເມືອງ

**ເມືອງ ອຸທຸມພອນ**

1 ທ່ານແຖວຄຳ ພົມມະວົງ ກຳມະການພັກແຂວງ, ເລຂາພັກເມືອງອຸທຸມພອນ

2 ທ່ານ ອຸ່ນແກ້ວ ວົງສາຄອນ ກຳມະການປະຈຳພັກເມືອງ, ປະທານແນວລາວສ້າງຊາດເມືອງ

3 ທ່ານ ນາງ ສົມພອນ ອິນທິຈັກ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ

4 ທ່ານ ສຸພາລັກ ອາດບັນດິດ ກຳມະການຄະນະພັກຮາກຖານ, ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ

5 ທ່ານ ສົມນຶກ ແກ້ວລັດສະໝີ ກຳມະການພັກເມືອງ, ຫົວໜ້າຫ້ອງການຍຸຕິທຳເມືອງ

**ເມືອງ ໄຊບູລີ**

1 ທ່ານ ຄາລາໄຊ ຫຼຸຍບົວທອງ ກຳມະການພັກແຂວງ, ເລຂາພັກເມືອງໄຊບູລີ

2 ທ່ານ ສົມບູນ ສີວົງດາວ ກຳມະການພັກເມືອງ, ຫົວໜ້າຫ້ອງການຍຸຕິທຳເມືອງ

3 ທ່ານ ດວງຕາ ເສນໄຊປັນຍາ ກຳມະການພັກເມືອງ, ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ

4 ທ່ານ ບຸນນ້ອຍ ໄຊຍະລາດ ຮອງເລຂາຄະນະພັກຮາກຖານ, ຮອງຫົວໜ້າໂຮງຮຽນການເມືອງແລະການປົກຄອງແຂວງ

5 ທ່ານ ນາງ ແກ້ວອຸດົມ ແສງວິໄລສັກ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ

**ເມືອງ ອາດສະພັງທອງ**

1 ທ່ານ ປອ ສຸກສົມພອນ ອະໂນໄທ ກຳມະການພັກແຂວງ, ເລຂາພັກຮາກຖານ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ

2 ທ່ານ ນາງ ຄອນສະຫວັນ ວອນທະວິສຸກ ກຳມະການປະຈຳພັກເມືອງ, ປະທານແນວລາວສ້າງຊາດ

3 ທ່ານ ດຣ ນິງເນດ ຄຳບຸນເຮືອງ ກຳມະການພັກເມືອງ, ຫົວໜ້າຫ້ອງການສາທາລະນະສຸກເມືອງ

4 ທ່ານ ນາງ ສຸກສະເຫີວຍ ແກ້ວປະເສີດ ກຳມະການຄະນະພັກຮາກຖານ, ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ

5 ທ່ານ ພູວາ ໄຊສີງຄາມ ກຳມະການພັກເມືອງ, ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ

**ເມືອງ ອາດສະພອນ**

1 ທ່ານ ບຸນລັດ ລໍບານເຢັນ ກຳມະການພັກແຂວງ, ເລຂາພັກເມືອງອາດສະພອນ

2 ທ່ານ ມູນມາ ປະສົມສີ ສະມາຊິກພັກ, ຫົວໜ້າຂະແໜງແຜນການ ແລະ ການເງິນ

3 ທ່ານ ນາງ ໂສດາ ຈັນວັນເພັງ ກຳມະການພັກເມືອງ, ຫົວໜ້າຫ້ອງ ວັດທະນະທຳ ແລະ ການທ່ອງທ່ຽວເມືອງ

4 ທ່ານ ນາງ ຈັນສະໝອນ ອັກຄະວົງ ກຳມະການພັກເມືອງ, ຫົວໜ້າຫ້ອງການແຮງງານແລະສະຫວັດດີການສັງຄົມ

5 ທ່ານ ສີປະເສີດ ສຸລິຍະ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ

**ເມືອງ ພະລານໄຊ**

1 ທ່ານ ລຳແກ້ວ ແສງໝູທອງ ກຳມະການພັກແຂວງ, ເລຂາພັກເມືອງພະລານໄຊ

2 ທ່ານ ນາງ ເບຕ້າ ຈັນທະວິສຸກ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ

3 ທ່ານ ວິໄລພອນ ກິ່ນບຸນກອງ ຄະນະພັກຮາກຖານ, ຮອງຫົວໜ້າສະຖາບັນຍຸຕິທຳແຫ່ງຊາດ ສາຂາສະຫວັນນະເຂດ

4 ທ່ານ ພົນທະມິດ ອິນທິລາດ ກຳມະການພັກເມືອງ, ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ

5 ທ່ານ ສົມໝາຍ ສີສຸລາດ ກຳມະການພັກເມືອງ, ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ

**ເມືອງ ພີນ**

1 ທ່ານ ພູລັດຕະນະ ພົມມະຫາໄຊ ກຳມະການພັກແຂວງ, ເລຂາພັກເມືອງພີນ

2 ທ່ານ ແສງມະນີ ພຸດທິລາດ ສະມາຊິກພັກ, ຫົວໜ້າຂະແໜງວັດທະນະທຳ-ສັງຄົມ

3 ທ່ານ ຄົມຄິດ ຍາດຕິວົງ ກຳມະການປະຈຳພັກເມືອງ, ຮອງປະທານຄະນະກຳມະການປົກຄອງເມືອງ

4 ທ່ານ ອິດສະຫຼະ ພົມມະສອນ ກຳມະການພັກເມືອງ, ຄາດຄະເນຫົວໜ້າຫ້ອງການສະພາປະຈຳເມືອງ

5 ທ່ານ ນາງ ຄຳຫຼ້າ ສະຫວັນໄຊ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ

**ເມືອງ ວິລະບູລີ**

1 ທ່ານ ສຸກສາຄອນ ໂພທິລາດ ກຳມະການພັກແຂວງ, ເລຂາພັກເມືອງວິລະບູລີ

2 ທ່ານ ຄຳໝື່ນ ຂັນທະວົງ ສະມາຊິກພັກ, ຮອງເລຂາທິການສະພາປະຊົນແຂວງ

3 ທ່ານ ນາງ ແວວມະຍຸລາ ວົງສີໄຕ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ

4 ທ່ານ ພັທ ດາວວອນ ຄົມທິລາດ ກຳມະການພັກເມືອງ, ຮອງຫົວໜ້າກອງບັນຊາການ ປກສ ເມືອງ

5 ທ່ານ ວົງພະຈັນ ສຸວັນນະລາດ ກຳມະການພັກເມືອງ, ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ

**ເມືອງ ເຊໂປນ**

1 ທ່ານ ພົງຄຳຮັກ ບຸດທະວົງ ກຳມະການພັກແຂວງ, ເລຂາພັກເມືອງເຊໂປນ

2 ທ່ານ ຂັນທອງ ຄົມທິລາດຮອງປະທານກວດກາຄະນະພັກຮາກຖານ, ຮອງເລຂາໜ່ວຍພັກ, ຮອງເລຂາທິການສະພາປະຊົນແຂວງ

3 ທ່ານ ນາງ ເພັດສະໝອນ ພິລາວັນ ກຳມະການປະຈຳພັກເມືອງ, ປະທານແນວລາວສ້າງຊາດເມືອງ

4 ທ່ານ ວັນນະຄອນ ທໍລະທາ ເລຂາຄະນະພັກຮາກຖານ, ຮັກສາການຫົວໜ້າຄະນະຄຸ້ມຄອງດ່ານສາກົນແດນສະຫວັນ

5 ທ່ານ ບຸນທ່ຽງ ບຸດໄຂທອນ ກຳມະການພັກເມືອງ, ຄາດຄະເນຫົວໜ້າຫ້ອງການສະພາປະຈຳເມືອງ

**ເມືອງ ນອງ**

1 ທ່ານ ຈິນດາວັນ ບຸດລາສີ ກຳມະການພັກແຂວງ, ເລຂາພັກເມືອງນອງ

2 ທ່ານ ສີວິໄລ ສໍເຊລະນອງ ກຳມະການພັກເມືອງ, ຫົວໜ້າຫ້ອງວ່າການເມືອງ

3 ທ່ານ ນາງ ຂັນໂຈມ ໂພທິລາດຮອງເລຂາໜ່ວຍພັກ, ຮອງປະທານກວດກາພັກ-ລັດເມືອງ

4 ທ່ານ ນາງ ທອງໃສ ວຸດທິສະຫວັດ ກຳມະການພັກເມືອງ, ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ

5 ທ່ານ ແພງມາ ຫຼວຍທິລາດ ຮອງເລຂາໜ່ວຍພັກ, ຮອງຫົວໜ້າຫ້ອງການສາທາລະນະສຸກເມືອງ

**ເມືອງ ໄຊພູທອງ**

1 ທ່ານ ປອ ວັນແສງ ແກ້ວບຸນພັນ ກຳມະການພັກແຂວງ, ເລຂາພັກເມືອງໄຊພູທອງ

2 ທ່ານ ສີທາ ສິງວິໄລ ອາດີດຮອງເລຂາພັກພັກນະຄອນ, ອາດີດປະທານກວດກາພັກນະຄອນ

3 ທ່ານ ນາງ ບົວຄຳ ພົມໂສພາກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ

4 ທ່ານ ສີປະເສີດ ແກ້ວຫານາມ ກຳມະການພັກເມືອງ, ປະທານສະຫະພັນກຳມະບານເມືອງ

ອ່ານຕໍ່ໜ້າ 9

# ມອບ-ຮັບເຄື່ອງຊ່ວຍເຫຼືອ ໃຫ້ແກ່ຄອບຄົວທີ່ຖືກຜົນກະທົບ



(ສພຂ)-ວັນທີ 15 ມັງກອນຜ່ານມາ, ທ່ານ ໄຊຍະເດດ ພຸຍຍະວົງ ແລະ ທ່ານນາງ ບົວໄຂ ເພັງພະຈັນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ພ້ອມດ້ວຍຄະນະ ໄດ້ນຳເຄື່ອງຊ່ວຍເຫຼືອມອບໃຫ້ແກ່ຄອບຄົວທີ່ຖືກຜົນກະທົບຈາກອັກຄີໄພຢູ່ເມືອງວິລະບູລີ ເຊິ່ງປະກອບມີ: ເງິນສົດ, ປາກະປ໋ອງ, ອາຫານແຫ້ງ, ເຄື່ອງນຸ່ງຮົ່ມ, ຜ້າຮົ່ມ ແລະເຄື່ອງໃຊ້ພາຍໃນຄົວເຮືອນລວມມູນ 89 ລ້ານກວ່າ ແກ່ຄອບຄົວນາງ ບູ່ ອາຍຸ 62 ປີ ປະຊາຊົນຢູ່ບ້ານດົງຍາງ ເມືອງວິລະບູລີ ແລະ ຄອບຄົວທ່ານຈອມຂ້ອນ ສາຍຝົນ ອາຍຸ 45 ປີ ປະຊາຊົນ ບ້ານໂນນສົມພູ ໂດຍມີທ່ານ ສຸກສາຄອນ ໂພທິລາດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ; ມີບັນດາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ແລະການຈັດຕັ້ງບ້ານເຂົ້າຮ່ວມເປັນສັກຂີພະຍານ.

ວັນດຽວກັນ, ວັນທີ 15 ມັງກອນ, ທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍທ່ານພູທອນພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງ ໄດ້ຕາງໜ້າພະແນກສຶກສາທິການ ແລະ ກິລາແຂວງ ມອບລົດຖີບທີ່ໄດ້ຮັບຈາກການຊ່ວຍເຫຼືອຂອງມູນນິທິຈີນເພື່ອພັດທະນາຊົນນະບົດ ຈຳນວນ 120 ຄັນ ເພື່ອມອບໃຫ້ນ້ອງນັກຮຽນຜູ້ທີ່ທຸກຍາກຂາດເຂີນຢູ່ໃນໂຮງຮຽນເມືອງພະລານໄຊ, ເມືອງພີນ, ເມືອງເຊໂປນ ແລະ ເມືອງນອງ ເມືອງລະ 30 ຄັນ ໂດຍການກ່າວຮັບຂອງບັນດາທ່ານເລຂາພັກເມືອງ; ມີບັນດາຄະນະນຳຂອງເມືອງ, ສສຂ ປະຈຳເຂດເລືອກຕັ້ງຂອງແຕ່ລະເມືອງ, ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ຜູ້ປົກຄອງ ແລະ ນ້ອງນັກຮຽນຂອງແຕ່ລະເມືອງ ຮ່ວມເປັນສັກຂີພະຍານ.






# ເສີມຂະຫຍາຍສິດເປັນເຈົ້າ ແລະ ພັນທະຂອງພົນລະເມືອງ

**# ທິດດີ**

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ທີ່ຈະມີຂຶ້ນໃນວັນທີ 22 ກຸມພາ 2026 ແມ່ນການເສີມຂະຫຍາຍສິດເປັນເຈົ້າແລະພັນທະພື້ນຖານຂອງພົນລະເມືອງລາວບັນດາເຜົ່າ, ການສະແດງອອກສິດດັ່ງກ່າວລວມມີ:

**ໜຶ່ງ:** ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນອົງການຕົວແທນໃຫ້ແກ່ສິດ ແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ; ສະນັ້ນ, ພົນລະເມືອງລາວຜູ້ມີສິດເລືອກຕັ້ງທຸກຄົນ ຕ້ອງເອົາໃຈໃສ່ຄົ້ນຄວ້າ, ຊອກຮູ້ປະຫວັດຂອງຜູ້ສະໝັກຮັບເລືອກຕັ້ງແຕ່ລະຄົນໃຫ້ຈະແຈ້ງ ເພື່ອປ່ອນບັດເລືອກຕັ້ງເອົາຜູ້ທີ່ມີມາດຕະຖານເງື່ອນໄຂຄົບຖ້ວນກວ່າໝູ່ ເປັນຕົວແທນປະຕິບັດສິດອຳນາດຂອງຕົນ ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

**ສອງ:** ປະຊາຊົນລາວບັນດາເຜົ່າ ແລະ ພົນລະເມືອງລາວທຸກຄົນ ໃຫ້ຕື່ນຕົວສະໝັກໃຈປະຕິບັດສິດຂອງຕົນ ໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດແລະສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2025 ຄື: "ພົນລະເມືອງລາວ ຜູ້ມີອາຍຸແຕ່ 18 ປີຂຶ້ນໄປ ມີສິດປ່ອນບັດເລືອກຕັ້ງ... ເວັ້ນເສຍແຕ່ຜູ້ເປັນບ້າ, ເສຍຈິດ ແລະ ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ, ປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ".

**ສາມ:** ປະຊາຊົນລາວບັນດາເຜົ່າ ແລະ ພົນລະເມືອງລາວທຸກຄົນ ໃຫ້ຕັ້ງໜ້າປະຕິບັດສິດຂອງຕົນຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 2 ຂອງລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2025 ທີ່ວ່າ: ລັດ ແຫ່ງ ສປປລາວ ແມ່ນ ລັດປະຊາທິປະໄຕປະຊາຊົນ. ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຊຶ່ງປະກອບດ້ວຍບັນດາຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ, ກະສິກອນ, ນັກຮຽນຮູ້ປັນຍາຊົນເປັນຫຼັກແຫຼ່ງ.

**ສີ່:** ປະຊາຊົນລາວບັນດາເຜົ່າ ແລະ ພົນລະເມືອງລາວທຸກຄົນ ໃຫ້ຕັ້ງໜ້າປະຕິບັດສິດຂອງຕົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງລັດຖະທຳມະນູນ ສະບັບປີ 2025 ທີ່ວ່າ: ສິດເປັນເຈົ້າຂອງປະເທດຊາດຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປະຕິບັດ ແລະ ຮັບປະກັນດ້ວຍການເຄື່ອນໄຫວຂອງລະບົບການເມືອງ ຊຶ່ງມີພັກປະຊາຊົນປະຕິວັດລາວ ເປັນແກນນຳ. ໝາຍຄວາມວ່າ ການປະຕິບັດສິດເປັນເຈົ້າ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງລາວ ແມ່ນຜ່ານການຈັດຕັ້ງຕ່າງໆ ແລະ ມີການນຳພາຂອງພັກ ບໍ່ແມ່ນເສລີຊະຊາຍ.

**ຫ້າ:** ປະຊາຊົນລາວບັນດາເຜົ່າ ແລະພົນລະເມືອງລາວທຸກຄົນ ມີສິດ ແລະ ໜ້າທີ່ ເຂົ້າຮ່ວມການກໍ່ສ້າງ ແລະປັບປຸງອຳນາດລັດຂັ້ນຕ່າງໆ ໂດຍຜ່ານການເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນຂັ້ນແຂວງ; ຖ້າຫາກມີພົນລະເມືອງລາວຜູ້ໃດຜູ້ໜຶ່ງ ບໍ່ໄປໃຊ້ສິດປ່ອນບັດເລືອກຕັ້ງ ກໍໝາຍວ່າຕົນເອງປະລະການປະຕິບັດສິດ ແລະ ພັນທະຂອງຕົນ ຢ່າງບໍ່ມີເຫດຜົນ ແລະ ທັງເປັນການສູນເສຍກຽດສັກສີທີ່ສະຫງ່າຂອງຕົນ.

**ຫົກ:** ປະຊາຊົນລາວບັນດາເຜົ່າ ແລະ ພົນລະເມືອງລາວທຸກຄົນ ໃຫ້ຍົກສູງສະຕິລະວັງຕໍ່ກົນອຸບາຍຂອງພວກຄົນບໍ່ດີທີ່ຈະສວຍໃຊ້ການເລືອກຕັ້ງເພື່ອໂຄສະນາແບ່ງແຍກ, ໃສ່ຮ້າຍປ້າຍສີການນຳໃຊ້ສິດປະຊາທິປະໄຕໃນການເລືອກຕັ້ງ, ການສົ່ງເສີມປະຊາທິປະໄຕແບບເສລີຊະຊາຍນອກກົດໝາຍ; ສະນັ້ນ, ພົນລະເມືອງລາວທຸກຄົນ ໃຫ້ຕັ້ງໜ້າປະກອບສ່ວນຢ່າງສົມກຽດ ເຮັດໃຫ້ການປ່ອນບັດເລືອກຕັ້ງມີຄວາມສະຫງົບ ແລະປອດໄພຮ້ອຍສ່ວນຮ້ອຍ.

**ເຈັດ:** ປະຊາຊົນລາວບັນດາເຜົ່າ ໂດຍສະເພາະພົນລະເມືອງລາວຜູ້ມີສິດເລືອກຕັ້ງທຸກຄົນ ຈົ່ງພ້ອມກັນຮໍ່າຮຽນ, ເຊື່ອມຊຶມລະບຽບການເລືອກຕັ້ງໃຫ້ເລິກເຊິ່ງ ເພື່ອໄປໃຊ້ສິດໃນວັນເລືອກຕັ້ງໃຫ້ຄົບຖ້ວນ, ຖືກຕ້ອງຕາມລະບຽບການເລືອກຕັ້ງ ແລະທັນເວລາຮ້ອຍສ່ວນຮ້ອຍ. ຖ້າເຮັດໄດ້ຄືແນວນັ້ນ, ກໍໝາຍຄວາມວ່າພົນລະເມືອງລາວທຸກຄົນ ສົມກຽດແລ້ວທີ່ເປັນເຈົ້າຂອງປະເທດຊາດ.

ຂໍຮຽກຮ້ອງເຖິງທຸກທ່ານ ຈົ່ງປະຕິບັດໜ້າທີ່ອັນສົມກຽດດ້ວຍຄວາມຮັບຜິດຊອບ ໄປປ່ອນບັດເລືອກຕັ້ງໃຫ້ໄດ້ຮ້ອຍສ່ວນຮ້ອຍ.



## ປອ. ໄຊສົມພອນ...

(ຕໍ່ຈາກໜ້າ 1)

ທານສະພາແຫ່ງຊາດ ພ້ອມດ້ວຍພັນລະຍາ ໄດ້ເຂົ້າຮ່ວມໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ເຂົ້າໃນອົງການອຳນາດລັດສູງສຸດ, ໃຫ້ການຕ້ອນຮັບໂດຍທ່ານ ສີລິລາດ ທິງສົນ ທອງເຜີງ ຮອງເລຂາພັກ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ.

ການປ່ອນບັດໃນຄັ້ງນີ້, ບໍ່ພຽງເປັນການປະຕິບັດພັນທະຂອງພົນລະເມືອງຕາມລັດຖະທຳມະນູນເທົ່ານັ້ນ, ແຕ່ຍັງເປັນການສະແດງໃຫ້ເຫັນເຖິງຄວາມເປັນປຶກແຜ່ນ, ຄວາມສາມັກຄີຮັກຊາດຂອງປວງຊົນລາວທັງຊາດ, ການປັບປຸງກົງຈັກລັດ ເພື່ອຄັດເລືອກເອົາບຸກຄະລາກອນທີ່ມີມາດຕະຖານ, ເງື່ອນໄຂ, ມີຄວາມຮູ້ຄວາມສາມາດແລະມີຄຸນສົມບັດສົມທຳປະຕິວັດ ເຂົ້າໄປປະຕິບັດໜ້າທີ່ໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນລາວບັນດາເຜົ່າ ທັງແມ່ນຂີດໝາຍສຳຄັນໃນການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ມີຄວາມເຂັ້ມແຂງໜັກແໜ້ນຂຶ້ນກວ່າເກົ່າ.

ບັນຍາກາດການປ່ອນບັດເລືອກຕັ້ງຢູ່ວັດສີບຸນເຮືອງ ແມ່ນມີຄວາມເປັນລະບຽບຮຽບຮ້ອຍ, ມີພໍ່ແມ່ປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ຈຳນວນ 582 ຄົນ ຍິງ 327 ຄົນ ໄດ້ມາລໍຖ້າໃຊ້ສິດ ແຕ່ເຊົ້າດ້ວຍໃບໜ້າຍິ້ມແຍ້ມແຈ່ມໃສ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນວ່າ: ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ມາໃຊ້ສິດເລືອກເອົາຕົວແທນທີ່ດີເຂົ້າສູ່ສະພາ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ເປັນເຈົ້າການຊ່ວຍແກ້ໄຂບັນຫາຕ່າງໆ ແລະ ລົງໃກ້ຊິດຕິດແທດເພື່ອເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ພົນລະເມືອງ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ໄດ້ຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ; ພ້ອມກັນນີ້, ທ່ານຍັງໄດ້ຮຽກຮ້ອງໃຫ້ພົນລະເມືອງທຸກຄົນ ຈົ່ງຍົກສູງຄວາມຮັບຜິດຊອບໃນການຕິດຕາມກວດກາການປະຕິບັດໜ້າທີ່ຂອງຕົວແທນທີ່ຕົນເລືອກໄປນັ້ນ ວ່າໄດ້ປະຕິບັດໜ້າທີ່ຢ່າງເຕັມທີ່ສົມກັບການເລືອກໃຫ້ເປັນຕົວແທນຂອງປະຊາຊົນ.

**(ພາບ-ຂ່າວ: ແກ້ວ ອຸເພັດ)**



## ປະທານ...

(ຕໍ່ຈາກໜ້າ 1)

ບັນດາອະດີດການນຳອາວຸໂສ, ຄະນະພັກ-ຄະນະບ້ານ ແລະ ຜູ້ມີສິດປ່ອນບັດເລືອກຕັ້ງພາຍໃນເຂດເທດສະບານເມືອງແປກ ໄດ້ເຂົ້າຮ່ວມພິທີ ແລະ ໃຊ້ສິດປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 9 ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ທີ່ສະໂມສອນເມືອງແປກ ເຊິ່ງເປັນຈຸດປ່ອນບັດໃຫຍ່ຂອງແຂວງຊຽງຂວາງ; ສຳລັບເຂດເລືອກຕັ້ງທີ 9 ມີຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ 10 ທ່ານ ຍິງ 3 ທ່ານ, ເລືອກເອົາ 7 ທ່ານ ແລະ ສສຂ 49 ທ່ານ ຍິງ 13 ທ່ານ, ເລືອກເອົາ 35 ທ່ານ, ມີຜູ້ມີສິດປ່ອນບັດ 174,419 ຄົນ, ມີ 432 ໜ່ວຍປ່ອນບັດ ແລະ ໜ່ວຍເຄື່ອນທີ່ອີກຈຳນວນໜຶ່ງ

**(ນາງ ອາລິນ ສຸພົມມະປະກິດ)**




## ນາຍົກ...

(ຕໍ່ຈາກໜ້າ 1)

ຊາຊົນແຂວງ (ສສຂ) ແຂວງຈຳປາສັກ ຊຸດທີ V ເຊິ່ງໃນພິທີອັນມີຄວາມໝາຍສຳຄັນນີ້ ມີທ່ານ ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາພັກແຂວງຈຳປາສັກພ້ອມດ້ວຍບັນດາອະດີດການນຳອາວຸໂສ, ຄະນະພັກ-ຄະນະບ້ານແລະຜູ້ມີສິດປ່ອນບັດເລືອກຕັ້ງພາຍໃນບ້ານໃຫຍ່ໂຊກອຳນວຍ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສຸກວິໃສ ສີສົມຫວັງ ປະທານຄະນະກຳມະການປົກຄອງນະຄອນປາກເຊ ໄດ້ກ່າວເປີດພິທີ ໂດຍເນັ້ນໜັກວ່າ: ການເລືອກຕັ້ງຄັ້ງນີ້ ແມ່ນຂະບວນການປະຕິບັດໜ້າທີ່ການເມືອງ ແລະສິດປະຊາທິປະໄຕຂອງພົນລະເມືອງລາວ ໃນການເລືອກເອົາບຸກຄົນທີ່ມີມາດຕະຖານຄົບຖ້ວນ ເຂົ້າໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນລາວບັນດາເຜົ່າ.

ກ່ອນເລີ່ມການປ່ອນບັດ, ທ່ານ ດຣ. ນາງ ພົງພັນ ວິລະພັນ ຕາງໜ້າຄະນະຮັບຜິດຊອບໜ່ວຍປ່ອນບັດ ໄດ້ແນະນຳລະບຽບການ ແລະ ວິທີການຂີດບັດລົງຄະແນນສຽງຢ່າງຖືກຕ້ອງ; ຈາກນັ້ນ, ທ່ານນາຍົກລັດຖະມົນຕີ ເປັນຜູ້ທຳອິດທີ່ປ່ອນບັດ ຕາມດ້ວຍການນຳຂັ້ນສູງ ແລະພໍ່ແມ່ປະຊາຊົນຕາມລຳດັບ ເຊິ່ງບັນຍາກາດດຳເນີນໄປດ້ວຍຄວາມເປັນລະບຽບຮຽບຮ້ອຍ.

**(ຂ່າວ+ພາບ: ແສງຈັນ ແລະ ອານຸສອນ ພູມມີທອນ)**

# ສະຫຼຸບການເຄື່ອນໄຫວ ວຽກງານປະຈຳເດືອນກຸມພາ




(ສພຂ)-ວັນທີ25ກຸມພານີ້ ທີ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ, ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວ ວຽກງານ ປະຈຳເດືອນ ກຸມພາ 2026 ແລະ ກຳນົດທິດທາງແຜນການການເຄື່ອນໄຫວວຽກງານ ປະຈຳເດືອນມີນາ 2026 ຂອງຄະນະປະຈຳສະພາປະຊາຊົນແຂວງ ໂດຍການເປັນປະທານກອງຂອງທ່ານ ຂັນໄຊ ຣັດຖະເຮົ້າຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນກຸມພາ 2026 ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາແຜນງົບປະມານແຫ່ງລັດປະຈຳປີ2026 ຂອງແຂວງສາລະວັນ; ການກະກຽມວຽກງານການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ(ສສຂ)Vເປັນຕົ້ນການປ່ອນບັດເລືອກຕັ້ງສສຊ ຊຸດທີ X ແລະ ສສຂ ຊຸດທີ V; ຈາກນັ້ນ, ໄດ້ປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນຢ່າງເປັນເຈົ້າການ ຕິດພັນກັບການປະຕິບັດໜ້າທີ່ຂອງຕົນ ເພື່ອປະກອບຄຳຄິດຄຳເຫັນເຂົ້າໃສ່ຮ່າງບົດສະຫຼຸບດັ່ງກ່າວ ໃຫ້ມີເນື້ອໃນຄົບຖ້ວນ ແລະ ສົມບູນ.

ພ້ອມນັ້ນ, ຍັງໄດ້ໄດ້ກຳນົດແຜນວຽກທີ່ສຳຄັນເພື່ອສືບຕໍ່ເຄື່ອນໄຫວວຽກງານ ປະຈຳເດືອນມີນາເປັນຕົ້ນປະກາດລາຍຊື່ ສສຊ ປະຈຳເຂດເລືອກຕັ້ງທີ 14 ຊຸດທີ X ແລະ ປະກາດລາຍຊື່ ສສຂ ສາລະວັນ ຊຸດທີ V; ກະກຽມສະຫຼຸບວຽກງານປະຈຳ 5 ປີຂອງ3ຄະນະກຳມະການແລະຄະນະເລຂາທິການ; ກະກຽມກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂຊຸດທີ V ແລະ ກະກຽມປັບປຸງໂຄງຮ່າງການຈັດຕັ້ງຂອງຫ້ອງວ່າການສະພາປະຊາຊົນແຂວງ.

**(ນາງ ຈັນທີ ດວງປັນຍາ)**

## ຄະນະກຳມະການ...

(ຕໍ່ຈາກໜ້າ 5)

**6) ເຂດເລືອກຕັ້ງເມືອງໄຊສະຖານ ຈຳນວນ 4 ທ່ານ, ຍິງ 1 ທ່ານ:**

1. ທ່ານ ພັນໂທ ພອນສະຫວັນ ວໍລະສັກ ກຳມະການພັກແຂວງ,ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ໄຊຍະສອນ ທີແກ້ວ ຄະນະພັກຣາກຖານ, ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ;

3. ທ່ານ ນາງ ພັດສະດົງ ອາລຸນ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ;

4. ທ່ານ ມອນສັກ ພົນທະລາດ ເລຂາໜ່ວຍພັກ, ຮອງຫົວໜ້າຄະນະຈັດຕັ້ງເມືອງ.

**7) ເຂດເລືອກຕັ້ງເມືອງພຽງ ຈຳນວນ 5 ທ່ານ, ຍິງ 2 ທ່ານ:**

1. ທ່ານ ເສນ ພັນລັກ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ຟອງສະໝຸດ ແກ້ວບົວ ຄະນະປະຈຳ ຄະນະພັກຣາກຖານ, ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ;

3. ທ່ານ ຈັນທະວີ ວັນນະພາພົນ ຄະນະປະຈຳ ຄະນະພັກຣາກຖານ, ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ;

4. ທ່ານ ນາງ ພອນມະນີ ແລງສຸທິພົງ ກຳມະການປະຈຳພັກເມືອງ, ຫົວໜ້າຄະນະຈັດຕັ້ງເມືອງ;

5. ທ່ານ ສອນເພັດ ສີຫານົນ ເລຂາໜ່ວຍພັກ, ຫົວໜ້າຫ້ອງການຍຸຕິທຳເມືອງ.

**8) ເຂດເລືອກຕັ້ງເມືອງທົ່ງມີໄຊ ຈຳນວນ 4 ທ່ານ, ຍິງ 1 ທ່ານ:**

1. ທ່ານ ພັນເອກ ສົມດີ ໄຊຍະລາດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ພັນໂທ ບຸນມາ ວາລະສິງ ຄະນະພັກຣາກຖານ, ຮອງຫົວໜ້າຫ້ອງການເມືອງ ກອງບັນຊາການທະຫານແຂວງ;

3. ທ່ານ ນາງ ພຸດ ຈຳປາດາກຳມະການພັກເມືອງ,ຫົວໜ້າຄະນະໂຄສະນາອົບຮົມເມືອງ;

4. ທ່ານ ບົວເງິນ ສຸກພາລີກຳມະການພັກເມືອງ,ຫົວໜ້າຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວເມືອງ.

**9) ເຂດເລືອກຕັ້ງເມືອງປາກລາຍ ຈຳນວນ 6 ທ່ານ, ຍິງ 2 ທ່ານ:**

1. ທ່ານ ຄຳຝັ້ນ ວົງສະຫວັນກຳມະການພັກແຂວງ,ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ສູນທະວີ ບຸນເຮືອງຄະນະພັກຣາກຖານ,ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ;

3. ທ່ານ ພຸດທະສອນ ສິດທິວົງ ກຳມະການປະຈຳພັກເມືອງ, ປະທານກວດກາພັກເມືອງ;

4. ທ່ານ ນາງ ບົວຄຳ ສີສະວົງຊົງ ຄະນະປະຈຳ ຄະນະບໍລິຫານງານຊາວໜຸ່ມແຂວງ, ຫົວໜ້າຂະແໜງບໍລິຫານ, ການເງິນ ສະພາປະຊາຊົນແຂວງ;

5. ທ່ານ ນາງ ລັດສະໝີ ແສງຈັນ ກຳມະການພັກເມືອງ, ຫົວໜ້າຄະນະໂຄສະນາອົບຮົມເມືອງ;

6. ທ່ານ ວັນສີ ວົງສັກດີ ຮອງເລຂາໜ່ວຍພັກ, ຮອງຫົວໜ້າຫ້ອງວ່າການເມືອງ.

**10) ເຂດເລືອກຕັ້ງເມືອງແກ່ນທ້າວ ຈຳນວນ 5 ທ່ານ, ຍິງ 1 ທ່ານ:**

1. ທ່ານ ຄຳປຸ່ນ ນອນສະບັບ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ສຸດາພອນ ດວງຫຼ້າ ເລຂາໜ່ວຍພັກ, ຫົວໜ້າພະແນກການຕ່າງປະເທດແຂວງ;

3. ທ່ານ ວິໄລເດດ ພົມມະເທບ ຜູ້ຊ່ວຍວຽກງານກວດກາໜ່ວຍພັກ,ຫົວໜ້າຂະແໜງບັນດາເຜົ່າຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ;

4. ທ່ານ ໂອລາ ໄພວົງ ກຳມະການພັກເມືອງ;

5. ທ່ານ ວຽງໄຊ ສຸກກະເສີມ ປະທານສະມາຄົມນັກທຸລະກິດສົ່ງເສີມການຜະລິດເພື່ອສົ່ງອອກຂອງເມືອງ.

**11) ເຂດເລືອກຕັ້ງເມືອງບໍ່ແຕນ ຈຳນວນ 5 ທ່ານ, ຍິງ 1 ທ່ານ:**

1. ທ່ານ ບຸນພະລັງ ວິໄລສັກ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ສົມຊາຍ ແກ້ວບົວ ເລຂາໜ່ວຍພັກ, ຫົວໜ້າດ່ານສາກົນພູດູ່;

3. ທ່ານ ສົມນຶກ ສີສະຫວັນຫົວໜ້າຂະແໜງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ;

4. ທ່ານ ໄພວັນ ໄຊຍະລາດ ກຳມະການພັກເມືອງ;

5. ທ່ານ ນາງ ຄຳໂກ້ ຈັນທະວົງ ກຳມະການພັກເມືອງ, ຫົວໜ້າຄະນະໂຄສະນາອົບຮົມເມືອງ.

ຮຽນບັນດາທ່ານທີ່ນັບຖື ແລະ ຮັກແພງ

ບັນດາລາຍຊື່ທີ່ຂ້າພະເຈົ້າໄດ້ປະກາດແຈ້ງການໄປນັ້ນ ແມ່ນຜູ້ທີ່ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງຊຸດທີVປະຈຳເຂດເລືອກຕັ້ງ 11 ເມືອງ ໃນທົ່ວແຂວງໄຊຍະບູລີ.

ດັ່ງນັ້ນ, ຄະນະກຳມະການເລືອກຕັ້ງຂັ້ນແຂວງຈຶ່ງໄດ້ປະກາດແຈ້ງການມາຍັງ ຜູ້ມີສິດເລືອກຕັ້ງໃນທົ່ວແຂວງໄຊຍະບູລີເພື່ອຮັບຊາບ. ພາຍຫຼັງທີ່ຄະນະກຳມະການເລືອກຕັ້ງຂັ້ນແຂວງໄດ້ອອກປະກາດແຈ້ງການສະບັບນີ້ແລ້ວ, ສະເໜີມາຍັງຄະນະກຳມະການເລືອກຕັ້ງຂັ້ນແຂວງ,ຄະນະກຳມະການເລືອກຕັ້ງຂັ້ນເມືອງຈັດຕັ້ງເຜີຍແຜ່ເຊື່ອມຊຶມ ຢູ່ເຂດເລືອກຕັ້ງຂອງຕົນ ຢ່າງທົ່ວເຖິງ ແລະທັນເວລາ ນັບແຕ່ມື້ໄດ້ຮັບປະກາດແຈ້ງການ ສະບັບນີ້ເປັນຕົ້ນໄປ.

**(ສພຂ ໄຊຍະບູລີ)**

## ປະກາດ...

(ຕໍ່ຈາກໜ້າ 6)

ສື່ສານແຂວງ;

4. ທ່ານ ປອ. ສີໄພວັນ ພົມມະສອນ ຮອງຜູ້ອຳນວຍການໂຮງຮຽນວິທະຍາໄລເຕັກນິກ-ວິຊາຊີບແຂວງ;

5. ທ່ານ ນາງ ສີສົມພອນ ພົມມະວົງ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ.

**ເຂດເລືອກຕັ້ງເມືອງເຊບັ້ງໄຟ**

1. ທ່ານ ທອງໄຊ ມັງໜໍ່ເມກ ກຳມະການປະຈຳພັກແຂວງ,ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ມະໂນທຳ ມະນີສິດໃສ ຮອງຫົວໜ້າຫ້ອງວ່າການແຂວງ;

3. ທ່ານ ນາງ ຄຳມະນີວອນ ໄຊຍະວົງ ກຳມະການພັກເມືອງ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງເມືອງ;

4. ທ່ານ ບຸນທັນ ພົມພົມມາ ກຳມະການພັກເມືອງ, ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ;

5. ທ່ານ ວິໄຊ ມະຫາໂຄດກຳມະການພັກເມືອງ,ຫົວໜ້າຫ້ອງການສຶກສາ ແລະກິລາເມືອງ

**ເຂດເລືອກຕັ້ງເມືອງໄຊບົວທອງ**

1. ທ່ານ ປອ. ສົມນະສອນແສງຈັນທະວົງກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ກຽນຕາ ວັນມະນາ ກຳມະການພັກແຂວງ, ຫົວໜ້າພະແນການຕ່າງປະເທດແຂວງ;

3. ທ່ານນາງວິໄລພອນ ພັນທະວົງ ກຳມະການພັກເມືອງ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງເມືອງ;

4. ທ່ານ ວິໄລ ຈັນທະບັນດິດ ຫົວໜ້າຂະແໜງນິຕິກຳ ແລະຍຸຕິທຳ ສະພາປະຊາຊົນແຂວງ;

5. ທ່ານ ທອງສະຫວັນ ດອນສິງເທບ ຮອງຫົວໜ້າຫ້ອງວ່າການເມືອງ.

**ເຂດເລືອກຕັ້ງເມືອງຄູນຄຳ**

1. ທ່ານ ຄຳປຽນ ມະນີຄຳ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ບຸດສະດາວອນ ປານີວົງ ກຳມະການພັກເມືອງ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງເມືອງ;

3. ທ່ານນາງຈຳປາທອງ ອິນທະວົງສາ ວ່າການເລຂາຄະນະບໍລິຫານງານຊາວໜຸ່ມແຂວງ;

4. ທ່ານ ຄຳສອນ ສູນທະລາ ກຳມະການພັກເມືອງ, ຫົວໜ້າຫ້ອງການສຶກສາ ແລະ ກິລາເມືອງ;

5. ທ່ານ ອິນຕາ ສີສຸກສັນ ກຳມະການພັກເມືອງ, ຫົວໜ້າຫ້ອງການອຸດສາຫະກຳແລະ ການຄ້າເມືອງ.

**(ເອື້ອ ມະໂນສີງ)**

## ຖະແຫຼງ...

(ຕໍ່ຈາກໜ້າ 7)

5 ທ່ານ ຈັນທະວີ ສຸວັນນະເສນ ຮອງເລຂາໜ່ວຍພັກ, ຫົວໜ້າຫ້ອງການຍຸຕິທຳເມືອງ

**ເມືອງ ຈຳພອນ**

1 ທ່ານ ສີໂທ ທໍລະທາ ກຳມະການພັກແຂວງ, ຫົວໜ້າພະແນກອຸດສາຫະກຳແລະການຄ້າແຂວງ

2ທ່ານນາງທິບພາພອນ ອິນສີຊຽງໃໝ່ ສະມາຊິກພັກ, ຫົວໜ້າຂະແໜງເສດຖະກິດ

3 ທ່ານ ພອນໄຊ ທຳມະວົງສາ ກຳມະການພັກເມືອງ, ຄາດຄະເນຫົວໜ້າຫ້ອງການສະພາປະຈຳເມືອງ

4 ທ່ານ ນາງ ອູໄລວັນ ໄຊຍະວົງສາ ຮອງເລຂາໜ່ວຍພັກ, ຮອງປະທານສະຫະພັນແມ່ຍິງເມືອງ

5ທ່ານພັທພົງສະຫວັນ ຕູ້ໂອ ຮອງເລຂາຄະນະພັກຮາກຖານ, ຮອງກອງບັນຊາການ ປກສ ເມືອງ

**ເມືອງ ຊົນນະບູລີ**

1 ທ່ານ ພັອ. ກອງມີ ມຽງມະນີຮອງເລຂາຄະນະພັກ, ປະທານກວດກາ,ຮອງກອງບັນຊາການ ປກສ ແຂວງ

2ທ່ານທະນະແກ້ວບຸນເຮືອງ ກຳມະການພັກເມືອງ, ຄາດຄະເນຫົວໜ້າຫ້ອງການສະພາປະຈຳເມືອງ

3 ທ່ານ ນາງ ໄກສອນ ສອນຍະສິດ ກຳມະການພັກເມືອງ, ປະທານກຳມະບານເມືອງ

4 ທ່ານ ທອງຄຳ ແກ້ວອາສາກຳມະການພັກເມືອງ,ຫົວໜ້າຫ້ອງການວັດທະນະທຳ ແລະ ທ່ອງທ່ຽວເມືອງ

5 ທ່ານ ນາງ ທອງປານ ລາດຊະວົງ ຄະນະພັກຮາກຖານ, ຫົວໜ້າຫ້ອງການຄຸ້ມຄອງນັກສຶກສາ

**ເມືອງ ສອງຄອນ**

1 ທ່ານ ລິນທອງ ບຸນທະມາລີ ກຳມະການພັກແຂວງ, ເລຂາພັກເມືອງສອງຄອນ

2 ທ່ານ ນາງ ແກ້ວວິໄລ ໂຄດສົມບັດສະມາຊິກພັກ,ຫົວໜ້າຂະແໜງບໍລິຫານ-ການເງິນ

3 ທ່ານ ນາງ ເຄືອຄຳ ໄຊຍະວົງ ກຳມະການປະຈຳພັກເມືອງ, ປະທານແນວລາວສ້າງຊາດເມືອງ

4 ທ່ານ ດາວຈັນ ວົງຈັນຄຳ ສະມາຊິກພັກ, ຮອງຫົວໜ້າອົງການໄອຍະການແຂວງ

5 ທ່ານ ສົມໄພ ວົງຄຳຊາວ ກຳມະການພັກເມືອງ,ຫົວໜ້າຫ້ອງການການເງິນເມືອງ

**ເມືອງ ທ່າປາງທອງ**

1 ທ່ານ ອິນຕອງ ລີຄຳຫານ ກຳມະການພັກແຂວງ,ເລຂາພັກເມືອງທ່າປາງທອງ

2ທ່ານ ພັດ ສຸລິພົງລາດ ສະໂພກຳມະການປະຈຳພັກເມືອງ, ຫົວໜ້າການເມືອງ ປກຊ ເມືອງ

3 ທ່ານ ນາງ ຄຳໃບ ບໍໄພບູນກຳມະການພັກເມືອງ,ປະທານສະຫະພັນແມ່ຍິງເມືອງ

4 ທ່ານ ສົມມິດ ແກ້ວຄູນເພັດ ກຳມະການພັກເມືອງ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ

5 ທ່ານ ສອນເພັດ ພົມຫຼວງສີຮອງເລຂາ,ຫົວໜ້າຫ້ອງການສາທາລະນະສຸກເມືອງ.

ອາດ ກະວີລາວ

# ຜູ້ແທນດີ ມີສີແກ່ຊາດ

# ດາວເປັ່ງແສງ

❋ ຊາວລາວທຸກເຂດແຄວ້ນ    ທົ່ວທ້ອງຖິ່ນຊົນນະບົດ
ຍັງຈົດຈໍາຈາລຶກ    ບໍ່ລະໄລລືມເວັ້ນ
ເລີດເດັ່ນໂຄສະນາແຈ້ງ    ຖະແຫຼງການທຸກພາກສ່ວນ
ມວນຊົນຊາວສໍາເຊື້ອ    ຍິນຮູ້ຊາບຄະດີ

❋ ສັງຄົມລາວຍຸກນີ້    ມີອັນປ່ຽນແປງນໍາ
ແຕ່ຢູ່ໃນຫຼັກການ    ຂອງພັກແນບນໍາຊີ້
ມີສະພາເປັນເຄົ້າ    ເປັນເສົາຄໍ້າແຂງແກ່ນ
ເປັນຕົວແທນອອກໜ້າ    ນໍາພາສ້າງຊ່ວຍແປງ

❋ ຜ່ານມາ ຫຼາຍແຫ່ງກໍເດັ່ນກ້າວ    ເກີນຄາດຄະເນແນ
ຍ້ອນແຜ່-ເຜີຍບົດຮຽນ    ປ່ຽນວິທີທະວີຄື້ນ
ໝາກຜົນນໍາສະໜອງໃຫ້    ມີໄຊງາມລາບລື່ນ
ສົດຊື່ນຊົມເອກອ້າງ    ບໍ່ຄາຄ້າງຂອດໃດ ດີແລ້ວ!

❋ ເອົາເດີ! ຜູ້ແທນໃໝ່ຊຸດນີ້    ຕ້ອງຄິດຖີ່ເຖິງຖອງ ກ່ອນເດີ
ຈະນັ່ງຄອງຄຽງສະພາ    ຊ່ວຍປະຊາເສີມສ້າງ
ໃຜຜູ້ຫວັງຫັກຫຼົ້ມ    ໂກຍໂກງກິນຊາດ
ຂາດສິນທໍາບອກໃບ້ ຢ່າຊີໝາຍຂີດເນັ້ນ    ມາເປັນເຈົ້າສັ່ງການ

❋ ຄວນເລືອກເອົາຜູ້ຮູ້    ລະດັບຊອດຊານສູງ
ຊັ້ນຊື່ປັນຍາຊົນ    ສະຫຼາດນໍານາຍໜ້າ
ສັດຊື່ສົມສະຫງວນຍ້ອງ    ທັງທໍາທຽມວາດ
ສາມາດຊູຊ່ວຍຊວ້ານ    ປະຊາສ້າງກໍ່ຂະຫຍາຍ

❋ ຄັນຫາກເຮົາເລືອກໄດ້    ຕາມຄາດຄະເນແນ
ໄດ້ແຕ່ຄົນດີໆ    ເພີ່ມສີໂສມໜ້າ
ປະຊາບັນດາເຊື້ອ    ຊົງຊາວຫຼາຍທ້ອງຖິ່ນ
ຄວາມປະສົງບໍ່ຂາດສິ້ນ    ນິຍົມຍ້ອງຊື່ນຊົມ ແທ້ໃດ!

❋ ເຊີນເຍີ! ອ້າຍເອື້ອຍນ້ອງ    ປອງດອງຮ່ວມສາມັກຄີ
ສິດທີ່ມີໃນຕົວ    ຢ່າຫວັ່ນກົວເກງຄ້ານ
ໄປຈັດການຕາມຂໍ້    ຫຼັກການນໍາເຜີຍແຜ່
ເລືອກເອົາແຕ່ຜູ້ຮູ້    ທົນສູ້ເພື່ອປະຊາ ເຮົາໃດ!

❋ ນີ້ເປັນໝາຍຂີດເນັ້ນ    ທາງເລືອກຜູ້ແທນເຮົາຊຸດນີ້
ເຊີນໄປລົງຄະແນນສຽງ    ຢ່າລັງເລນອນລ້າ
ຊາວສອງກຸມພາເຊົ້າ    ສວາຍງາຍຮີບຈ້າວເລັ່ງ
ຊ່ວງເສັງກັນເລືອກເຟັ້ນ    ດີ-ຮ້າຍໃຫ້ໄຕ່ຕອງ ເອົາເດີ!

❋ ໄດ້ຜູ້ແທນດີ ປຸນດັ່ງໄດ້ແກ້ວ    ມະນີໂຊດມະຫານິນ
ມີຄ່າແພງຜໍໃຈ    ຈ່າຍກິນບໍ່ໝົດສິ້ນ
ເປັນຊັບສິນສົມສ້າງ    ທົນໂທມຖົງຖິ່ງ
ສິ່ງນັ້ນ ຄືເພິ່ນພາຜ່ານໜົ້ນ    ທົນສູ້ພັດທະນາ ຫັ້ນແລ້ວ!

❋ ເພິ່ນຈະຄົນຄວ່າຄົ້ນ    ໄງ້ກົ້ນພູມປັນຍາ
ພາປະຊາຊາວລາວ    ເຜົ່າຊົນສະແຫວງສ້າງ
ເສີມຂະຫຍາຍຈັດຕັ້ງ    ຕາມແນວທາງປ່ຽນແປງໃໝ່
ຜູ້ແທນດີ-ມີວິໄຖືກຕ້ອງ    ຖືກໃຈຊາວພີ່ນ້ອງ    ປອງດອງສ້າງພັດທະນາ ທ່ານເອີຍ!



## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທຽນ

❋ **ສໍາເລັດ**ລົງຮຽບຮ້ອຍ ບຸນໃຫຍ່ຂອງລາວເຮົາ ວັນທີ 22 ກຸມພາຜ່ານມາ ປະຊາໄດ້ ໄປໃຊ້ສິດເລືອກຕັ້ງ **ສສຊ** ບັດປ່ອນ **ສສຂ** ພ່າພ້ອມ ບັນກ້ອງທົ່ວແຜ່ນດິນ ຍິນດີນໍາອ້າຍເອື້ອຍ ຜູ້ແທນໃໝ່ໄດ້ຄະແນນສູງ ກຽມຊຸກຈູງຄວາມຈະເລີນ ສູ່ປະຊາລາວກ້າວ ລໍໃຫ້ທ່ານແຂງທັນທ້າວ ນໍາພາລາວຈະເລີນຮຸ່ງ ພຸ່ງພົ້ນຄ່າວ່າດ້ອຍ ພັດທະນາເອົ້າເລົ່າຊາບ **ທ່ານເອີຍ!**

❋ **ກຸມພາ**ກຽມຜ່ານພົ້ນ ມີນາຍ່ອງຍາມເຢືອນ ໃນເດືອນມີຫຼາຍງານ ວຽກສໍາຄັນຂອງຊາດ **8 ມີນາ**ໂລກາກ້ອງ ກຽມສະຫຼອງກັບເບື້ອງບັນທົ່ວທີ **22**ແມ່ນມື້ **ວັນສ້າງຕັ້ງພັກປະຊາ** ທັງ **21 ມີນາ**ພ່າພ້ອມ ບັ້ນຮົບໃຫຍ່ທີ່ຝັງໃຈ ວິລະກໍາຫຼວງຫຼາຍ ໄພ່ປະຊາລາວຮູ້ ເປັນບົດຮຽນສອນໃຫ້ຄົນຮຸ່ນຫຼັງຕາມໄຕ່ ຈໍາຝັງໃຈຮັບຮູ້ ສານສ້າງສືບໄປ **ນັ້ນແລ້ວ!**

## ຊວນຍິ້ມ

# ພົ້ງລຶ້ງ

## ເລື່ອງ: ມາຜິດບ່ອນ

ກ ກັບ ຂ ກິນເຫຼົ້ານໍາກັນຈົນຮອດ 1 ໂມງເຊົ້າ ແລ້ວ ກ ຈຶ່ງໄປສົ່ງ ຂ ຢູ່ເຮືອນ, ພໍໄປຮອດເຮືອນ

**ຂ:** ເຮີຍ... ອັນນີ້ບໍ່ແມ່ນເຮືອນກູ, ມຶງພາກູມາຫຍັງນີ້

**ກ:** ກະນີ້ແຫຼະ ເຮືອນມຶງ

**ຂ:** ບໍ່ແມ່ນ ນີ້ມັນບໍ່ແມ່ນເຮືອນກູ!!! ມຶງເບິ່ງ ເບິ່ງພຸ້ນດູ, ມີປ້ອງກັບຈັບກະບອງຢືນຢູ່ຫັ້ນ

**ກ:** ອັນນັ້ນບໍ່ແມ່ນປ້ອງກັບ... ອັນນັ້ນແມ່ນເມຍມຶງ



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ບ້າຊຸ່ນແພ້ບ້າໃສ ໃຈດີແພ້ໃຈຮ້າຍ

ລັດຖະສະພາຕ່າງປະເທດ

# Sri Lanka ຖອນສິດທິພິເສດ, ຍົກເລີກເງິນບຳນານສະມາຊິກສະພາ

(AFP) - ລັດຖະສະພາສີລັງກາ ໄດ້ລົງຄະແນນສຽງເພື່ອຍົກເລີກເງິນບຳນານສຳລັບສະມາຊິກລັດຖະສະພາທຸກຄົນ ແລະ ພັນລະຍາໝ້າຍຂອງພວກເຂົາ ເຊິ່ງສອດຄ່ອງກັບຄຳໝັ້ນສັນຍາຂອງລັດຖະບານ ທີ່ຈະຫຼຸດສິດທິພິເສດຂອງນັກການເມືອງ.

ວັນທີ 17 ກຸມພາຜ່ານມາ, ຮາຣ໌ຊານາ ນານາຢັກກາຣາ (Harsana Nanayakkara) ລັດຖະມົນຕີກະຊວງຍຸຕິທຳ ໄດ້ກ່າວຕໍ່ລັດຖະສະພາໃນລະຫວ່າງການລົງມະຕິໃຫ້ຍົກເລີກເງິນບຳນານວ່າ: ເມື່ອປະຊາຊົນເຫັນຄຸນນະພາບຂອງການອະພິປາຍ ແລະ ສິ່ງທີ່ສະມາຊິກລັດຖະສະພາເວົ້າໃນລັດຖະສະພາ, ພວກເຂົາຄິດວ່າ ສະມາຊິກລັດຖະສະພາບໍ່ສົມຄວນໄດ້ຮັບເງິນບຳນານ.

ລັດຖະບານຝ່າຍຊ້າຍຂອງປະທານາທິບໍດີ ອານຸຣາ ກຸມາຣາ ດິດສະນາຢາເກ (Anura Kumara Dissanayake) ໄດ້ຍົກເລີກກົດໝາຍເງິນບຳນານລັດຖະສະພາ ເຊິ່ງບັງຄັບໃຊ້ມາ 49 ປີ ໂດຍມີຜົນໃນທັນທີ ພຽງບໍ່ເທົ່າໃດເດືອນຫຼັງຈາກການຍົກເລີກສິດທິພິເສດສຳລັບທີ່ຢູ່ອາໄສ, ພາຫະນະ ແລະ ຜູ້ຮັກສາຄວາມປອດໄພຫຼາຍພັນຄົນ ຂອງອະດີດປະທານາທິບໍດີ.

ລັດຖະສະພາສີລັງກາ ເຊິ່ງມີສະມາຊິກ 225 ຄົນ ແລະ ພັກລັດຖະບານມີສຽງສ່ວນຫຼາຍຫຼາຍກວ່າສອງສ່ວນສາມ (159 ທີ່ນັ່ງ) ໄດ້ລົງຄະແນນສຽງເຫັນດີ 154 ແລະ ຄັດຄ້ານພຽງ 2 ສຽງເທົ່ານັ້ນ.

ເຖິງຢ່າງໃດກໍຕາມ, ຊາຈິດ ເປຣມາດາຊາ (Sajith Premadasa) ຜູ້ນຳຝ່າຍຄ້ານໂຕ້ຖຽງວ່າ ເງິນບຳນານມີຄວາມຈຳເປັນ ເພື່ອຮັບປະກັນວ່າສະມາຊິກລັດຖະສະພາມີປະກັນສັງຄົມຫຼັງຈາກອອກຈາກຕຳແໜ່ງ; ບໍ່ດັ່ງນັ້ນ, ພວກເຂົາອາດຈະຖືກລໍ້ລວງໃຫ້ສະສົມຄວາມຮັ່ງມີຜ່ານການສໍ້ລາດບັງຫຼວງ ເພື່ອຮັບປະກັນຄວາມເປັນຢູ່ທີ່ດີໃນໄວກະສຽນ.

ພາຍໃຕ້ກົດໝາຍສະບັບກ່ອນໜ້ານີ້, ສະມາຊິກລັດຖະສະພາ ມີສິດໄດ້ຮັບເງິນບຳນານຫຼັງຈາກດຳລົງຕຳແໜ່ງຄົບຫ້າປີ, ຂະນະທີ່ເຈົ້າໜ້າທີ່ລັດຄົນອື່ນໆຕ້ອງເຮັດວຽກຄົບສິບປີ ຈຶ່ງຈະໄດ້ຮັບສິດດັ່ງກ່າວ.



# ທາຄາອິຈິ ໄດ້ຮັບເລືອກຕັ້ງເປັນນາຍົກ ລັດຖະມົນຕີຍີ່ປຸ່ນອີກຄັ້ງຢ່າງເປັນທາງການ



(Xinhua) - ຊານາເອະ ທາຄາອິຈິ ປະທານພັກເສລີປະຊາທິປະໄຕ (LDP) ເຊິ່ງເປັນພັກລັດຖະຂອງຍີ່ປຸ່ນ ໄດ້ຮັບເລືອກຕັ້ງເປັນນາຍົກລັດຖະມົນຕີຄົນທີ 105 ຂອງປະເທດ ເມື່ອວັນພຸດທີ 18 ກຸມພາຜ່ານມາ ໂດຍສະມາຊິກລັດຖະສະພາ; ກອງປະຊຸມສະໄໝວິສາມັນລັດຖະສະພາທີ່ຈັດຂຶ້ນໃນວັນນັ້ນ, ສະພາຜູ້ແທນລາດສະດອນ ແລະ ສະພາສູງ ໄດ້ລົງຄະແນນສຽງເລືອກຕັ້ງນາຍົກລັດຖະມົນຕີຕາມລຳດັບ.

ໃນການລົງຄະແນນສຽງຂອງສະພາຕ່ຳ, ທາຄາອິຈິ ໄດ້ຮັບ 354 ສຽງໃນຮອບທຳອິດ ໂດຍເອົາຊະນະ ຈຸນຍະ ໂອກາວະ (Junya Ogawa) ຫົວໜ້າພັກຝ່າຍຄ້ານຕົ້ນຕໍ ຄືພັນທະມິດປະຕິຮູບສາຍກາງ (CRA) ທີ່ໄດ້ຮັບ 50 ສຽງ ແລະ ຜູ້ສະໝັກແຂ່ງຂັນຄົນອື່ນໆ. ສ່ວນສະພາສູງ, ຕ້ອງມີການເລືອກຕັ້ງຮອບທີສອງເນື່ອງຈາກບໍ່ມີຜູ້ສະໝັກຄົນໃດໄດ້ຮັບສຽງສ່ວນຫຼາຍໃນຮອບທຳອິດ; ຈາກນັ້ນ, ທາຄາອິຈິ ໄດ້ຮັບຄະແນນນຳດ້ວຍ 125 ສຽງ, ຕາມດ້ວຍ ໂອກາວະ 65 ສຽງ.

ສະພາຜູ້ແທນລາດສະດອນທີ່ມີອຳນາດ ຍັງໄດ້ເລືອກຕັ້ງ ໄອສຸເກະ ໂມຣິ (Eisuke Mori) ສະມາຊິກສະພາອາວຸໂສຈາກພັກ LDP ແລະ ອະດີດລັດຖະມົນຕີກະຊວງຍຸຕິທຳ ເປັນປະທານສະພາ ແລະ ເຄອິຈິ ອິຊິອິ (Keiichi Ishii) ສະມາຊິກສະພາຈາກພັກ CRA ເປັນຮອງປະທານສະພາ.

ທາຄາອິຈິ ແລະ ຄະນະລັດຖະມົນຕີຂອງນາງ ໄດ້ລາອອກພ້ອມກັນໃນຕອນເຊົ້າ ຕາມທີ່ລັດຖະທຳມະນູນກຳນົດໄວ້, ກ່ອນທີ່ຄະນະລັດຖະມົນຕີຊຸດໃໝ່ຈະເປີດຕົວໃນຕອນບ່າຍ.

ເນື່ອງຈາກຄະນະລັດຖະມົນຕີຂອງ ທາຄາອິຈິ ໄດ້ຮັບການແຕ່ງຕັ້ງເມື່ອບໍ່ເທົ່າໃດເດືອນມານີ້ ຫຼັງຈາກທີ່ນາງກາຍເປັນຫົວໜ້າພັກເສລີປະຊາທິປະໄຕ ແລະ ຕໍ່ມາເປັນນາຍົກລັດຖະມົນຕີໃນເດືອນຕຸລາ, ການປ່ຽນແປງໃນຄະນະລັດຖະມົນຕີ ຈຶ່ງບໍ່ໜ້າຈະເກີດຂຶ້ນ, ຕາມສື່ມວນຊົນທ້ອງຖິ່ນລາຍງານ; ນອກຈາກຜູ້ບໍລິຫານພັກ LDP ແລ້ວ, ລັດຖະ ມົນຕີທຸກຄົນ ລວມທັງ ໂທຊິມິດສຶ ໂມເຕກິ (Toshimitsu Motegi) ລັດຖະມົນຕີກະຊວງການຕ່າງປະເທດ, ຊັດສຶກິ ຄາຕາຢາມະ (Satsuki Katayama) ລັດຖະມົນຕີກະຊວງການເງິນ ແລະ ຊິນຈິໂຣ ໂຄອິຊູມິ (Shinjiro Koizumi) ລັດຖະມົນຕີກະຊວງປ້ອງກັນປະເທດ ຄາດວ່າຈະຍັງຄົງຢູ່ໃນຕຳແໜ່ງເດີມໃນຄະນະລັດຖະມົນຕີຊຸດທຳອິດຂອງ ທາຄາອິຈິ, ຕາມການລາຍງານຂອງສຳນັກຂ່າວກຽວໂດ (Kyodo News).

# Bulgaria ຈະຈັດການເລືອກຕັ້ງກ່ອນກຳນົດໃນວັນທີ 19 ເມສາ



(Xinhua) - ປະທານາທິບໍດີ ອີເລຍນາ ໂຢໂຕວາ (Iliana Iotova) ກ່າວເມື່ອວັນພຸດທີ 18 ກຸມພາຜ່ານມາວ່າ ບຸນກາລີ ຈະຈັດການເລືອກຕັ້ງສະພາແຫ່ງຊາດກ່ອນກຳນົດໃນວັນທີ 19 ເມສານີ້ ແລະ ຈະອອກລັດຖະດຳລັດແຕ່ງຕັ້ງລັດຖະບານຮັກສາການ ຕາມທີ່ ອັນເດຣ ກູຣອຟ (Andrey Gurov) ຜູ້ໄດ້ຮັບການສະເໜີຊື່ເປັນນາຍົກລັດຖະມົນຕີ ສະເໜີຊື່ໄວ້.

ໂຢໂຕວາ ຖະແຫຼງການດັ່ງກ່າວທັນທີຫຼັງຈາກ ກູຣອຟ ໄດ້ສະເໜີລາຍຊື່ຄະນະລັດຖະມົນຕີຮັກສາການຕໍ່ນາງ ໃນກອງປະຊຸມທີ່ຖ່າຍທອດສົດທາງໂທລະພາບ. "ຂ້າພະເຈົ້າຈະອອກລັດຖະດຳລັດແຕ່ງຕັ້ງຄະນະລັດຖະມົນຕີຢ່າງເປັນທາງການຂອງທ່ານ ແລະ ລໍຖ້າການສາບານຕົນເຂົ້າຮັບຕຳແໜ່ງຕໍ່ໜ້າສະພາແຫ່ງຊາດລວມທັງອອກລັດຖະດຳລັດເພື່ອຈັດການເລືອກຕັ້ງສະພາແຫ່ງຊາດ ໃນວັນທີ 19 ເມສາ 2026" ໂຢໂຕວາ ກ່າວກັບ ກູຣອຟ. "ພາລະກິດທີ່ສຳຄັນທີ່ສຸດ ຄືການກະກຽມການເລືອກຕັ້ງສະພາແຫ່ງຊາດທີ່ຍຸຕິທຳຕາມກົດໝາຍຂອງປະເທດ," ນາງກ່າວ.

ໂຢໂຕວາ ໄດ້ແຕ່ງຕັ້ງ ກູຣອຟເປັນນາຍົກລັດຖະມົນຕີຮັກສາການ ແລະ ຂໍໃຫ້ເຂົາສະເໜີລາຍຊື່ຄະນະລັດຖະມົນຕີຮັກສາການ ເມື່ອອາທິດກ່ອນໜ້ານີ້ ຫຼັງຈາກລັດຖະບານປະສົມທີ່ນຳໂດຍນາຍົກລັດຖະມົນຕີ ໂຣເຊນເຊລຢາຊຄອຟ (Rosen Zhelyazkov) ລາອອກໃນເດືອນທັນວາ 2025 ແລະ ພັກການເມືອງໃນສະພາແຫ່ງຊາດ ບໍ່ສາມາດເລືອກຕັ້ງລັດຖະບານໃໝ່ໄດ້.

ພາຍໃຕ້ລັດຖະທຳມະນູນຂອງປະເທດ, ປະທານາທິບໍດີ ມີໜ້າທີ່ແຕ່ງຕັ້ງຄະນະລັດຖະມົນຕີຮັກສາການ ແລະ ກຳນົດວັນເລືອກຕັ້ງໃໝ່ພາຍໃນສອງເດືອນຕາມຂໍ້ສະເໜີຂອງນາຍົກລັດຖະມົນຕີຮັກສາການ.

ກູຣອຟ ອາຍຸ 50 ປີ ປັດຈຸບັນດຳລົງຕຳແໜ່ງຮອງຜູ້ວ່າການທະນາຄານແຫ່ງຊາດ; ກ່ອນໜ້ານີ້, ເຂົາເຄີຍເປັນສະມາຊິກສະພາແຫ່ງຊາດ ແລະ ເປັນຮອງສາດສະດາຈານຢູ່ມະຫາວິທະຍາໄລອາເມລິກາໃນປະເທດບຸນກາລີ, ຊ່ຽວຊານດ້ານການເງິນອິງການ, ການຄຸ້ມຄອງຄວາມສ່ຽງ, ການປະເມີນມູນຄ່າບໍລິສັດ ແລະ ການຄຸ້ມຄອງການລົງທຶນ.

❖ ວິເສດ ສະແຫວງສຶກສາ

# ເພື່ອຄຸນນະພາບ ຂອງກຳລັງຕຳຫຼວດ

ຂ່າວຈາກ ສປຈີນ ໃນຕົ້ນເດືອນມັງກອນ ປີນີ້ ໃຫ້ຮູ້ກ່ຽວກັບຂະບວນການທາບທາມຮ່າງກົດໝາຍຕຳຫຼວດປະຊາຊົນ (People’s Police Law) ໃນຂອບເຂດທົ່ວປະເທດຈີນ. ກົດໝາຍຕຳຫຼວດປະຊາຊົນ ທີ່ນຳໃຊ້ຢູ່ໃນປັດຈຸບັນນີ້ ມີອາຍຸການນຳໃຊ້ມາແລ້ວກວ່າ 3 ທົດສະວັດ; ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງເພື່ອໃຫ້ສອດຄ່ອງກັບສະພາບການໃໝ່ຂອງໂລກ ແລະ ຂອງພາຍໃນຈີນເອງ ແລະ ອີກດ້ານໜຶ່ງ ກໍແມ່ນເພື່ອຍົກສູງປະສິດທິພາບໃນການເຄື່ອນໄຫວຂອງກຳລັງຕຳຫຼວດ ໃນການປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ເນື້ອໃນປັບປຸງໃໝ່ ເນັ້ນບົດບາດຂອງຕຳຫຼວດໃນການປ້ອງກັນຄວາມໝັ້ນຄົງແຫ່ງຊາດ, ປ້ອງກັນສິດທິ ແລະ ຜົນປະໂຫຍດຕາມກົດໝາຍຂອງປະຊາຊົນ ແລະ ເພື່ອຮັບປະກັນໃຫ້ການເຄື່ອນໄຫວປະຕິບັດງານຂອງເຈົ້າໜ້າທີ່ຕຳຫຼວດ ສອດຄ່ອງກັບກົດໝາຍ. ນີ້ຄືເນື້ອໃນຄຳຖະແຫຼງຂອງກະຊວງປ້ອງກັນຄວາມສະຫງົບ ໃນການເປີດບັ້ນທາບທາມຄຳເຫັນຂອງສັງຄົມຕໍ່ກັບຮ່າງກົດໝາຍສະບັບນີ້.

**ຈະປາບປາມການສໍ້ໂກງທາງໂທລະຄົມແບບບໍ່ໄວ້ໜ້າ**

ເມື່ອປະມານ 1 ເດືອນຜ່ານມາ, ທາງການຂອງມຽນມາ ໄດ້ຈັດໃຫ້ມີການຖະແຫຼງຂ່າວເພື່ອເປີດເຜີຍເປົ້າໝາຍຂອງມຽນມາໃນການປາບປາມແບບບໍ່ໄວ້ໜ້າຂະບວນການສໍ້ໂກງທາງໂທລະຄົມມະນາຄົມ ແລະ ການພະນັນທາງອອນລາຍ. ທາງການມຽນມາ ຖືວ່າການສໍ້ໂກງ ແລະ ການພະນັນທາງອອນລາຍເປັນໄພຄຸກຄາມຕໍ່ຄວາມໝັ້ນຄົງຂອງຊາດ ເພາະມັນທຳລາຍຄວາມໄວ້ວາງໃຈຂອງປະຊາຊົນ, ຄວາມໝັ້ນຄົງທາງເສດຖະກິດ, ສະຖຽນລະພາບຂອງປະເທດ ແລະ ກຽດສັກສີຂອງຊາດ; ເພື່ອເຮັດສຳເລັດການປາບປາມດັ່ງກ່າວ, ມຽນມາ ໄດ້ເພີ່ມທະວີການຮ່ວມມືກັບຫຼາຍໆປະເທດ, ໄດ້ສ້າງຕັ້ງຄະນະກຳມະການລະດັບຊາດ ຂຶ້ນໃນວັນທີ 10 ທັນວາ 2025 ເພື່ອປາບປາມການສໍ້ໂກງ ແລະ ການພະນັນທາງອອນລາຍ. ໃນ 2 ປີຜ່ານມາ, ທາງການມຽນມາ ໄດ້ເນລະເທດຄົນຕ່າງປະເທດ ຫຼາຍກວ່າ 70,000 ຄົນ ຈາກ 54 ປະເທດ ທີ່ມີການພົວພັນກັບການສໍ້ໂກງ ແລະ ການພະນັນທາງອອນລາຍ.

**ແຜນຫ້າມໃຊ້ຈອກຢາງທີ່ໃຊ້ພຽງຄັ້ງດຽວແລ້ວຖິ້ມ**

ມີຂ່າວກ່ຽວກັບຄວາມພະຍາຍາມແບບຈິງຈັງຕັ້ງໜ້າຂອງທາງການ ສ.ເກົາຫຼີ ທີ່ບອກວ່າຈະມີການຫ້າມໃຊ້ຈອກຢາງ ຫຼື ປະລາສະຕິກ ປະເພດໃຊ້ຄັ້ງດຽວ ເພື່ອຫຼຸດຜ່ອນສິ່ງເສດເຫຼືອ, ຂ່າວບອກວ່າມາດຕະການຫ້າມນີ້ແມ່ນສ່ວນໜຶ່ງຂອງແຜນການຮອບດ້ານເພື່ອຫຼຸດຜ່ອນການໃຊ້ຜະລິດຕະພັນປະເພດຢາງ; ທາງການຈະກຳນົດໃຫ້ລາຄາຈອກຢາງສູງຂຶ້ນຈາກ 50-100 ວອນຕໍ່ຈອກ 1 ອັນ ໃນປັດຈຸບັນ ເປັນ 100-200 ວອນ, ແຜນການຍົກເລີກການໃຊ້ຈອກຢາງທີ່ວ່ານີ້ ຈະເລີ່ມຈາກຮ້ານອາຫານຂະໜາດໃຫຍ່ ລົງໄປຫາຮ້ານອາຫານຂະໜາດນ້ອຍ ໃນທົ່ວປະເທດ.



**ຕິດຕາມ...**

(ຕໍ່ຈາກໜ້າ 1)

ລະດັບຊາດ (ຄລຊ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາວຽກງານຮອບດ້ານແລະບັນຍາກາດກ່ອນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV ຢູ່ແຂວງເຊກອງ ແລະ ແຂວງສາລະວັນ ຕາມລຳດັບ ເພື່ອຮັບຟັງບັນດາຄຳຄິດເຫັນ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ຂອງອະນຸກຳມະການ ປກຊ-ປກສ ແລະ ອະນຸກຳມະການເລຂານຸການ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງ (ຄລຂ-ມ) ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ຕາມມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ຂອງ ຄລຊ ເຊິ່ງໄດ້ຈັດກອງປະຊຸມທີ່ສະພາປະຊາຊົນແຂວງ; ທີ່ແຂວງເຊກອງ, ມີທ່ານ ດົງເຜັດ ພະຍົນ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ບັນດາທ່ານຫົວໜ້າ-ຮອງຫົວໜ້າອະນຸກຳມະການຕ່າງໆແລະກອງເລຂາຊ່ວຍວຽກຂອງ ຄລຂ-ມ ເຂົ້າຮ່ວມຢ່າງພ້ອມພຽງ; ທີ່ແຂວງສາລະວັນ, ມີທ່ານ ພົຈວ. ສີເສີດ ສອນດາລາ ຄະນະປະຈຳພັກແຂວງ, ຫົວໜ້າກອງບັນຊາການ ປກສ ແຂວງ, ບັນດາທ່ານຫົວໜ້າ-ຮອງຫົວໜ້າອະນຸກຳມະການຕ່າງໆ ແລະກອງເລຂາຊ່ວຍວຽກຂອງ ຄລຂ-ມເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມທີ່ແຂວງເຊກອງ ໄດ້ຮັບຟັງການລາຍງານການກະກຽມບັນດາໜ້າວຽກຕ່າງໆເຊິ່ງມາຮອດປັດຈຸບັນເຫັນວ່າມີຜົນສຳເລັດ ແລະ ມີຄວາມພ້ອມ 100% ໂດຍສະເພາະສຳເລັດການໂຄສະນາຫາສຽງຂອງຜູ້ສະໝັກຮັບເລືອກຕັ້ງ. ສຳລັບວຽກງານ ປກຊ-ປກສ ແມ່ນໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງແຂງແຮງ ໂດຍສະເພາະໄດ້ນຳພາ-ຊີ້ນຳບັນດາກຳລັງເຫຼົ່າຮົບວິຊາສະເພາະຂອງບັນດາຫ້ອງ, ກອງພັນ, ຄ້າຍ ແລະ ປກສ 4 ຕົວເມືອງ ໃຫ້ເຄື່ອນໄຫວຕິດຕາມກວດກາສະພາບລວມຂອງສັງຄົມ ທັງພາຍໃນ ແລະ ນອກແຂວງ ແລະ ສ່ອງແສງລາຍງານສະພາບການຕ່າງໆແຕ່ລະໄລຍະໃຫ້ຂັ້ນເທິງຮັບຊາບຢ່າງປົກກະຕິ ແລະ ອອກແຈ້ງການໃຫ້ເພີ່ມທະວີຄວາມເອົາໃຈໃສ່ລະບອບປະຈຳການຕະຫຼອດ24ຊົ່ວໂມງ ເພື່ອຄອຍເຫດ, ຮັບແຈ້ງຄວາມຈາກພາກສ່ວນຕ່າງໆຂອງສັງຄົມ; ຈັດວາງກຳລັງລາດຕະເວນ ແລະປະຈຳການແຮສະພາບການສະເພາະ ເພື່ອແກ້ໄຂເຫດການສຸກເສີນຕ່າງໆທີ່ອາດຈະເກີດຂຶ້ນໃຫ້ທ່ວງທັນກັບເວລາ; ຈັດວາງກຳລັງສືບຂ່າວ ລົງເຄື່ອນໄຫວຕິດຕາມກວດກາ, ກຳແໜ້ນສະພາບການ ແລະ ປະສານສົມທົບກັບກຳລັງເຫຼົ່າຮົບວິຊາສະເພາະຂອງບັນດາແຂວງທີ່ໃກ້ຄຽງເພື່ອຊ່ວຍຕິດຕາມກວດກາການເຄື່ອນໄຫວຕ່າງໆຂອງບັນດາເປົ້າໝາຍທີ່ກໍ່ຄວາມບໍ່ສະຫງົບ ເຮັດໃຫ້ມີຄວາມສະຫງົບໂດຍພື້ນຖານ ແລະ ມີຄວາມພ້ອມ 100%. ພ້ອມນັ້ນກັນ, ໄດ້ມີການສົນທະນາແລກປ່ຽນບັນຫາຕ່າງໆເປັນຕົ້ນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ທີ່ຕິດພັນກັບວຽກງານກະກຽມ ແລະດຳເນີນການເລືອກຕັ້ງຂອງແຕ່ລະອະນຸກຳມະການ ເພື່ອຮັບປະກັນຄວາມພ້ອມຮອບດ້ານ ໃຫ້ແກ່ການເລືອກຕັ້ງຄັ້ງນີ້ ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ຈາກນັ້ນ, ຍັງໄດ້ລົງກວດກາຕົວຈິງບັນຍາກາດ ແລະ ສະຖານທີ່ປ່ອນບັດເລືອກຕັ້ງຢູ່ບ້ານຫ້ວຍຊາຍ ໜ່ວຍເລືອກຕັ້ງທີII ຂອງເມືອງທ່າແຕງ ເຫັນວ່າຈັດຕັ້ງປະຕິບັດຕາມຄຳແນະນຳ ແລະ ແຈ້ງການຂອງຂັ້ນເທິງວາງອອກ ແລະ ມີຄວາມພ້ອມ 100%.

ກອງປະຊຸມທີ່ແຂວງສາລະວັນ, ທ່ານ ຈັນເພັງ ສາຍທຳມະວົງ ກຳມະການພັກແຂວງ, ຮອງຫົວໜ້າອະນຸກຳມະການເລຂານຸການ ໄດ້ລາຍງານການກະກຽມບັນດາໜ້າວຽກຕ່າງໆ ເຊິ່ງມາຮອດປັດຈຸບັນມີຜົນສຳເລັດ ແລະ ມີຄວາມພ້ອມ 100% ໂດຍສະເພາະສຳເລັດການໂຄສະນາຫາສຽງຂອງຜູ້ສະໝັກຮັບເລືອກຕັ້ງ. ສຳລັບວຽກງານປກຊ-ປກສ ແມ່ນໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງແຂງແຮງ ໂດຍສະເພາະໄດ້ນຳພາ-ຊີ້ນຳບັນດາກຳລັງເຫຼົ່າຮົບວິຊາສະເພາະຂອງບັນດາຫ້ອງ, ກອງພັນ, ຄ້າຍ ແລະ ປກສ 8 ຕົວເມືອງ ເຄື່ອນໄຫວຕິດຕາມກວດກາສະພາບລວມຂອງສັງຄົມ ທັງພາຍໃນ ແລະ ນອກແຂວງ; ຈັດວາງກຳລັງລາດຕະເວນ ແລະ ປະຈຳການ ເພື່ອແກ້ໄຂເຫດການສຸກເສີນຕ່າງໆທີ່ອາດຈະເກີດຂຶ້ນໃຫ້ທ່ວງທັນກັບເວລາ ເພື່ອຮັບປະກັນໃຫ້ການເລືອກຕັ້ງຄັ້ງນີ້ ບັນລຸຕາມ 4ຄາດໝາຍໃຫຍ່ຢ່າງຄົບຖ້ວນ ແລະ ມີຄຸນນະພາບ. ຕອນບ່າຍວັນດຽວກັນ, ທ່ານ ຈັນເພັງ ສາຍທຳມະວົງ ໄດ້ນຳພາຄະນະລົງເຄື່ອນໄຫວຕິດຕາມກວດກາວຽກງານຮອບດ້ານ ແລະ ບັນຍາກາດການກະກຽມເລືອກຕັ້ງຢູ່ເມືອງລະຄອນເພັງ, ໃຫ້ການຕ້ອນຮັບໂດຍທ່ານ ເວີນມະນີ ມຸ່ງສີວົງສາກຳມະການພັກແຂວງ, ປະທານຄະນະກຳມະການເລືອກຕັ້ງເມືອງ ພ້ອມທັງລາຍງານການກະກຽມຄວາມພ້ອມໃຫ້ແກ່ການເລືອກຕັ້ງ; ຈາກນັ້ນ, ໄດ້ລົງຕິດຕາມສະຖານທີ່ໜ່ວຍປ່ອນບັດບ້ານລະ ຄອນເພັງໃຫຍ່, ບ້ານພູຖ້ຳພວງ ແລະ ບ້ານໜອງສະໂນ ເຊິ່ງໃນແຕ່ລະຈຸດກໍໄດ້ລາຍງານກ່ຽວກັບການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເລືອກຕັ້ງຄັ້ງນີ້ ໄດ້ດຳເນີນໄປຢ່າງປອດໄພ, ໂປ່ງໃສ, ຖືກຕ້ອງຕາມກົດໝາຍ ແລະ ບັນລຸຜົນຕາມເປົ້າໝາຍທີ່ກຳນົດໄວ້.

ໂອກາດນີ້, ທ່ານ ພົຈວ. ປອ. ມາລາ ວິລະຈິດ ພ້ອມດ້ວຍຄະນະຍັງໄດ້ເຄື່ອນໄຫວຕິດຕາມຊຸກຍູ້ວຽກງານ ປກຊ-ປກສ ຢູ່ດ່ານສາກົນປາກຕະພານອີກດ້ວຍ.

ທົ່ວແຂວງເຊກອງ ມີ 106 ໜ່ວຍປ່ອນບັດ, ຜູ້ມີສິດປ່ອນບັດເລືອກຕັ້ງ 76,910 ຄົນເພີ່ມຂຶ້ນຈາກຊຸດທີ່ຜ່ານມາ 7,126 ຄົນ, ມີຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ຊຸດທີ X ຈຳນວນ 10 ທ່ານ ຍິງ 2 ທ່ານ, ເລືອກເອົາ 7 ທ່ານ, ມີຜູ້ສະໝັກຮັບເລືອກຕັ້ງເປັນ ສສຂ ຊຸດທີ V 33 ທ່ານ ຍິງ 09 ທ່ານ, ເລືອກເອົາ 25 ທ່ານ.

ແຂວງສາລະວັນ ມີ 8 ເມືອງ, ມີພົນລະເມືອງ454,139 ຄົນ ຍິງ 226,963 ຄົນ, ມີ 362 ໜ່ວຍປ່ອນບັດ (ໃນນັ້ນ, ໜ່ວຍປ່ອນບັດຂອງກຳລັງ ປກຊ-ປກສ ລວມກັນ 10 ໜ່ວຍ), ມີ722ຫີບປ່ອນບັດ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 276,658 ຄົນ; ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ຊຸດທີ X ມີ 14 ທ່ານ ຍິງ 3 ທ່ານ, ເລືອກເອົາ 10 ທ່ານ, ຜູ້ສະໝັກຮັບເລືອກຕັ້ງເປັນສສຂ ມີ 56 ທ່ານ, ເລືອກເອົາ 40 ທ່ານ.

**(ນາງ ກົງໃຈ ແສງອຳພັນ)**




*#ບ່າວກະບື*

**ບັນ**ດາຜົວໆທັງຫຼາຍ ລ້ວນແຕ່ຄືກັນອ້ອຍຕ້ອຍ, ມີແຕ່ໃບໜ້າຂອງພວກເຂົາເທົ່ານັ້ນ ແຕກຕ່າງກັນ; ທັງນີ້ ກໍເພື່ອໃຫ້ແມ່ຍິງຈຳແນກອອກວ່າໃຜເປັນໃຜ.

***#BAOKBU***

All husbands are alike but they have different faces so that women can tell them apart.

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ